ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 019 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 28.1.2016

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ການຕ້ານການຄ້າມະນຸດ

- ອີງຕາມ ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ( ສະບັບປັບປຸງ ປີ 2015 ) ໝວດທີ VI ມາດຕາ 67 ຂໍ້1;
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 022/ສພຊ, ລົງວັນທີ 17 ທັນວາ 2015;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 01/ຄປຈ, ລົງວັນທີ 15 ມັງກອນ 2016.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ :**

ມາດຕາ 1. ປະກາດໃຊ້ກົດໝາຍວ່າດ້ວຍ ການຕ້ານການຄ້າມະນຸດ.

ມາດຕາ 2. ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 022 /ສພຊ

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ
## ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ການຕ້ານການຄ້າມະນຸດ

---

ອີງຕາມມາດຕາ 53 ຂໍ້ 1 ຂອງລັດຖະທຳມະນູນ ( ສະບັບປັບປຸງ ປີ 2015 ) ແລະ ມາດຕາ 11 ຂໍ້ 1 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ( ສະບັບປັບປຸງ ປີ 2015 ) ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າ ພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ໃນວາລະກອງປະຊຸມຕອນບ່າຍ ຂອງວັນທີ 17 ທັນວາ 2015

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

**ມາດຕາ 1** ຮັບຮອງເອົາກົດໝາຍວ່າດ້ວຍ ການຕ້ານການຄ້າມະນຸດ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

**ມາດຕາ 2** ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 17 ທັນວາ 2015

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 73 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 17 ທັນວາ 2015

# ກົດໝາຍ

# ວ່າດ້ວຍ ການຕ້ານການຄ້າມະນຸດ

## ພາກທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ, ກວດກາ ວຽກງານຕ້ານການຄ້າມະນຸດ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານດັ່ງກ່າວ ເປັນລະບົບ, ຖືກຕ້ອງ ແລະ ມີປະສິດທິຜົນ ແນໃສ່ ປົກປ້ອງສິດ, ຜົນປະໂຫຍດ, ຊີວິດ, ສຸຂະພາບ, ກຽດສັກສີ, ເສລີພາບຂອງພົນລະເມືອງ, ຮັກສາຮີດຄອງປະເພນີອັນດີງາມຂອງຊາດ, ເຮັດໃຫ້ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ການຄ້າມະນຸດ**

ການຄ້າມະນຸດ ແມ່ນ ການຊອກຫາ, ລັກພາຕົວ, ການເຄື່ອນຍ້າຍ, ການຂົນສົ່ງ ຫຼື ນຳສົ່ງ, ຮັບເອົາຄົນຢູ່ພາຍໃນ ຫຼື ຕ່າງປະເທດ, ການໃຫ້ບ່ອນພັກເຊົາ ຫຼື ລີ້ຊ່ອນດ້ວຍການຂົນຂວາຍ, ແນະນຳ, ຕົວະຍົວະຫຼອກລວງ, ຊື້ຈ້າງ, ຈອບອອຍ, ຍຸຍົງ, ສວຍໃຊ້ອຳນາດ, ບັງຄັບ, ນາບຂູ່, ຜູກມັດດ້ວຍໜີ້ສິນ, ການເອົາເດັກມາລ້ຽງ ຫຼື ເອົາເດັກເປັນລູກລ້ຽງແອບແຝງ, ໝັ້ນໝາຍແອບແຝງ, ແຕ່ງດອງແອບແຝງ, ການໃຫ້ຖືພາ, ຂໍທານ ແລະ ການ ຖ່າຍຮູບພາບ, ສະແດງ, ເຜີຍແຜ່ສິ່ງລາມົກ ຫຼື ດ້ວຍຮູບການອື່ນ ເພື່ອຂູດຮີດແຮງງານ, ຂູດຮີດທາງເພດ, ເປັນຂ້າທາດ, ຄ້າໂສເພນີ, ບັງຄັບໃຫ້ເປັນໂສເພນີ, ເອົາອະໄວຍະວະຕ່າງໆຂອງຮ່າງກາຍໄປຂາຍ ແລະ ສິ່ງອື່ນ ທີ່ຂັດກັບກົດໝາຍ ແລະ ວັດທະນະທຳອັນດີງາມຂອງຊາດ ຫຼື ຈຸດປະສົງອື່ນ ເພື່ອຫາຜົນປະໂຫຍດ.

**ມາດຕາ 3 ການຕ້ານການຄ້າມະນຸດ**

ການຕ້ານການຄ້າມະນຸດ ແມ່ນ ການປ້ອງກັນ, ການສະກັດກັ້ນ, ການດຳເນີນຄະດີ ໃສ່ຜູ້ກະທຳຜິດໃນສະຖານຄ້າມະນຸດ, ການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ດ້ວຍການປະສານສົມທົບລະຫວ່າງ ການຈັດຕັ້ງ, ພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ, ຕ່າງປະເທດ, ພາກພື້ນ ແລະ ສາກົນ.

**ມາດຕາ 4 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. **ການເປັນຂ້າທາດ** ໝາຍເຖິງ ການບໍ່ມີສິດທິພື້ນຖານຂອງມະນຸດ ຍ້ອນຢູ່ໃຕ້ການຄວບຄຸມ ແລະ ການຊື້ຂາດ ຂອງຜູ້ຂູດຮີດ;

2. **ການຂູດຮີດແຮງງານ** ໝາຍເຖິງ ການບັງຄັບໃຫ້ອອກແຮງງານ, ເຮັດວຽກເກີນແຮງງານ ຫຼື ເກີນເວລາ ໂດຍບໍ່ຈ່າຍຄ່າແຮງງານ ຫຼື ຈ່າຍບໍ່ຄົບຕາມການຕົກລົງກັນ;

3. **ການຂູດຮີດທາງເພດ** ໝາຍເຖິງ ການບັງຄັບໃຫ້ບຸກຄົນອື່ນເປັນທາດທາງເພດ, ເປັນໂສເພນີ, ກະທຳສິ່ງລາມົກ ຫຼື ສະໜອງຄວາມຕ້ອງການທາງເພດດ້ວຍຮູບການອື່ນ;

4. **ຜູ້ຖືກເຄາະຮ້າຍ** ໝາຍເຖິງ ຜູ້ໄດ້ຮັບຄວາມເສຍຫາຍໂດຍກົງທາງດ້ານ ສຸຂະພາບ, ຊີວິດ, ຈິດໃຈ, ກຽດສັກສີ, ເສລີພາບ ຫຼື ຊັບສິນຈາກທຸກຮູບການຂອງການຄ້າມະນຸດ;

5. **ເຫຍື່ອ** ໝາຍເຖິງ ເປົ້າໝາຍເປັນຜູ້ຖືກເຄາະຮ້າຍ;

6. **ການປົກປ້ອງຜູ້ຖືກເຄາະຮ້າຍ** ໝາຍເຖິງ ການກອບກູ້, ການສົ່ງຕໍ່, ການຮັກສາຄວາມປອດໄພ ແລະ ການຮັກສາຄວາມລັບ ກ່ຽວກັບຜູ້ຖືກເຄາະຮ້າຍ;

7. **ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ** ໝາຍເຖິງ ການໃຫ້ບ່ອນພັກເຊົາຊົ່ວຄາວທີ່ປອດໄພ ແລະ ສິ່ງຈຳເປັນໃນການດຳລົງຊີວິດ, ດ້ານ ການແພດ, ກົດໝາຍ, ການສຶກສາ ແລະ ຝຶກອົບຮົມວິຊາຊີບ, ເສດຖະກິດ, ການກັບຄືນສູ່ຄອບຄົວ ແລະ ສັງຄົມ;

8. **ກຸ່ມສ່ຽງ** ໝາຍເຖິງ ກຸ່ມຄົນທີ່ເປັນເປົ້າໝາຍຂອງການຄ້າມະນຸດ ເຊັ່ນ ຜູ້ທຸກຍາກ, ຜູ້ໄດ້ຮັບຜົນກະທົບຈາກຄວາມຮຸນແຮງໃນຄອບຄົວ, ເດັກກຳພ້າກຳພອຍ, ຜູ້ວ່າງງານ ລວມທັງພໍ່ແມ່, ຜູ້ປົກຄອງ, ຍາດພີ່ນ້ອງ;

9. **ຜູ້ທີ່ມີຄວາມສ່ຽງ** ໝາຍເຖິງ ບຸກຄົນທີ່ຢູ່ໃນກຸ່ມສ່ຽງ ຊຶ່ງຕົກເຂົ້າຢູ່ໃນໄລຍະຕົ້ນຂອງຂະບວນການຄ້າມະນຸດ ເຊັ່ນ ຢູ່ໃນໄລຍະຂົນຂວາຍ ແລະ ເຄື່ອນຍ້າຍ ຫຼື ຂົນສົ່ງ;

10. **ບຸກຄົນໃກ້ຊິດຂອງຜູ້ຖືກເຄາະຮ້າຍ** ໝາຍເຖິງ ຍາດສາຍຕັ້ງ ແລະ ຍາດສາຍຂວາງຂອງຜູ້ຖືກເຄາະຮ້າຍ;

11. **ການຊອກຫາ** ໝາຍເຖິງ ການຊອກຮູ້, ຕິດຕໍ່ພົວພັນ, ໄປ ມາ ຫາເປົ້າໝາຍ ຫຼື ກຸ່ມສ່ຽງ;

12. **ການລັກພາຕົວ** ໝາຍເຖິງ ການຈັບ, ການກັກຂັງ ຫຼື ຄຸມຂັງບຸກຄົນໃດໜຶ່ງ ເພື່ອການຄ້າມະນຸດ;

13. **ການໃຫ້ບ່ອນພັກເຊົາ ຫຼື ລີ້ຊ່ອນ** ໝາຍເຖິງ ການໃຫ້ທີ່ພັກອາໄສ, ຊຸກເຊື່ອງບຸກຄົນໃດໜຶ່ງ ຊຶ່ງຜູ້ເປັນເຈົ້າຂອງ ຫຼື ຜູ້ທີ່ຮັບຜິດຊອບບ່ອນດັ່ງກ່າວຮູ້ວ່າການເຂົ້າພັກເຊົານັ້ນ ແມ່ນເພື່ອການຄ້າມະນຸດ;

14. **ການຂົນສົ່ງ ຫຼື ນຳສົ່ງ** ໝາຍເຖິງ ການພາໄປ, ສົ່ງໄປ, ໃຫ້ຜູ້ອື່ນພາໄປ ຫຼື ໃຫ້ການຊ່ວຍເຫຼືອໃນການເດີນທາງ ເພື່ອເຄື່ອນຍ້າຍບຸກຄົນ ຫຼື ກຸ່ມຄົນໃດໜຶ່ງ ຈາກຈຸດໜຶ່ງໄປຫາອີກຈຸດໜຶ່ງ ພາຍໃນປະເທດ ຫຼື ຈາກ ສປປ ລາວ ໄປຕ່າງປະເທດ ຫຼື ຈາກຕ່າງປະເທດມາ ສປປ ລາວ ຫຼື ໃຊ້ ສປປ ລາວ ເປັນທາງຜ່ານ ເພື່ອການຄ້າມະນຸດ;

15. **ການຮັບເອົາຄົນ** ໝາຍເຖິງ ການເອົາບຸກຄົນໃດໜຶ່ງມາເຮັດວຽກ ດ້ວຍການຕົວະຍົວະ, ຫຼອກລວງ, ບັງຄັບ, ນາບຂູ່, ກັກຂັງ ຫຼື ນຳໃຊ້ວິທີການອື່ນ ເພື່ອການຄ້າມະນຸດ;

16. **ການຊັກຊວນ** ໝາຍເຖິງ ການໂຄສະນາ, ການຊັກຊວນ ຫຼື ຊວນເຊື່ອ ເພື່ອໃຫ້ເປົ້າໝາຍ ຫຼື ກຸ່ມສ່ຽງ ຫຼົງເຊື່ອ ແລະ ປະຕິບັດຕາມ;

17. **ການແນະນຳ** ໝາຍເຖິງ ການບົ່ງບອກ, ການໃຫ້ຂໍ້ມູນແກ່ເປົ້າໝາຍ ຫຼື ກຸ່ມສ່ຽງ;

18. **ການຕົວະຍົວະຫຼອກລວງ** ໝາຍເຖິງ ການໃຊ້ ກົນອຸບາຍ, ເລ່ຫຼ່ຽມ ຫຼື ວິທີການໃດໜຶ່ງ ເພື່ອໃຫ້ເປົ້າໝາຍ ຫຼື ກຸ່ມສ່ຽງຫຼົງເຊື່ອ ແລະ ປະຕິບັດຕາມ;

19. **ການຊື້ຈ້າງ** ໝາຍເຖິງ ການໃຫ້ເງິນ, ຄຳ, ວັດຖຸສິ່ງຂອງ ແລະ ຜົນປະໂຫຍດອື່ນ ແກ່ເປົ້າໝາຍ ຫຼື ກຸ່ມສ່ຽງ;

20. **ການຈອບອອຍ** ໝາຍເຖິງ ການໃຊ້ຄຳເວົ້າ ເພື່ອດຶງດູດຈິດໃຈຂອງເປົ້າໝາຍ ຫຼື ກຸ່ມສ່ຽງ ໃຫ້ຫຼົງເຊື່ອ ແລະ ປະຕິບັດຕາມ;

21. **ການຍຸຍົງ** ໝາຍເຖິງ ການຍຸແຍ່, ຊຸກຍູ້ໃຫ້ເປົ້າໝາຍ ຫຼື ກຸ່ມສ່ຽງ ປະຕິບັດຕາມ;

22. **ການສວຍໃຊ້ອຳນາດ** ໝາຍເຖິງ ການໃຊ້ອຳນາດ, ອິດທິພົນ, ຕຳແໜ່ງ, ໜ້າທີ່ ໂດຍບໍ່ຖືກຕ້ອງ ເພື່ອຫາຜົນປະໂຫຍດຈາກການຄ້າມະນຸດ;

23. **ການບັງຄັບ** ໝາຍເຖິງ ການໃຊ້ກຳລັງ, ໃຊ້ອາວຸດ ເພື່ອໃຫ້ ເປົ້າໝາຍ ຫຼື ກຸ່ມສ່ຽງ ປະຕິບັດຕາມ;

24. **ການນາບຂູ່** ໝາຍເຖິງ ການກະທຳ ຫຼື ການໃຊ້ວາຈາ ເພື່ອໃຫ້ເປົ້າໝາຍ ຫຼື ກຸ່ມສ່ຽງ ມີຄວາມຢ້ານກົວ ແລະ ປະຕິບັດຕາມເຈດຈຳນົງຂອງຜູ້ນາບຂູ່;

25. **ການຜູກມັດດ້ວຍໜີ້ສິນ** ໝາຍເຖິງ ການເອົາໃຫ້, ສະເໜີໃຫ້ເງິນ, ຄຳ, ວັດຖຸສິ່ງຂອງ ແລະ ຜົນປະໂຫຍດອື່ນ ແກ່ເປົ້າໝາຍ ຫຼື ກຸ່ມສ່ຽງ ເພື່ອການຄ້າມະນຸດ;

26. **ການແອບແຝງ** ໝາຍເຖິງ ການປົກປິດ, ເຊື່ອງອຳພາງຈຸດປະສົງທີ່ແທ້ຈິງຂອງການກະທຳໃດໜຶ່ງ ເຊັ່ນ ການເອົາເດັກມາລ້ຽງ ຫຼື ເອົາເດັກເປັນລູກລ້ຽງແອບແຝງ, ການໝັ້ນໝາຍແອບແຝງ, ການແຕ່ງດອງແອບແຝງ ເພື່ອນຳໄປຂາຍ, ຂູດຮີດທາງເພດ, ຂູດຮີດແຮງງານ ຫຼື ຫາຜົນປະໂຫຍດອື່ນທີ່ບໍ່ຖືກຕ້ອງຕາມກົດໝາຍ;

27. **ການໃຫ້ຖືພາ** ໝາຍເຖິງ ການບັງຄັບ, ຕົວະຍົວະຫຼອກລວງ ຫຼື ສະໝັກໃຈຖືພາ, ອອກລູກ ໃຫ້ຜູ້ອື່ນ ເພື່ອການຄ້າມະນຸດ;

28. **ການຂໍທານ** ໝາຍເຖິງ ການບັງຄັບ, ນາບຂູ່, ໃຊ້ກຳລັງ ໃຫ້ບຸກຄົນອື່ນ ໄປຂໍທານ ເພື່ອຜົນປະໂຫຍດຂອງຕົນ;

29. **ການຖ່າຍຮູບພາບ, ສະແດງ, ເຜີຍແຜ່ສິ່ງລາມົກ** ໝາຍເຖິງ ການບັງຄັບ, ນາບຂູ່, ໃຊ້ກຳລັງ ໃຫ້ບຸກຄົນອື່ນ ຖ່າຍຮູບພາບ, ສະແດງ ສິ່ງລາມົກດ້ວຍຄວາມບໍ່ສະໝັກໃຈ ເພື່ອຜົນປະໂຫຍດຂອງຕົນ;

30. **ເດັກ** ໝາຍເຖິງ ບຸກຄົນທີ່ມີອາຍຸຕ່ຳກວ່າ ສິບແປດປີ;

31. **ອົງການ** ໝາຍເຖິງ ອົງການລັດທຽບເທົ່າກະຊວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ.

**ມາດຕາ 5 ນະໂຍບາຍຂອງລັດກ່ຽວກັບວຽກງານຕ້ານການຄ້າມະນຸດ**

ລັດ ຖືເອົາວຽກງານຕ້ານການຄ້າມະນຸດ ເປັນວຽກງານໜຶ່ງທີ່ສຳຄັນທີ່ສຸດ ດ້ວຍການ ໂຄສະນາ, ສຶກສາອົບຮົມທົ່ວປວງຊົນໃນຫຼາຍຮູບການ ແລະ ວິທີການ ເປັນການປູກຈິດສຳນຶກໃຫ້ເຫັນໄດ້ຜົນຮ້າຍຂອງການຄ້າມະນຸດ ແລະ ມີມາດຕະການເດັດຂາດ ຕໍ່ຜູ້ຄ້າມະນຸດ.

ລັດ ສະໜອງງົບປະມານ, ປະກອບບຸກຄະລາກອນ, ພາຫະນະ ແລະ ວັດຖຸປະກອນເຂົ້າໃນວຽກງານຕ້ານການຄ້າມະນຸດ, ຊຸກຍູ້ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ຄອບຄົວ ແລະ ສັງຄົມ ໃຫ້ເຂົ້າຮ່ວມໃນການເຄື່ອນໄຫວວຽກງານຕ້ານການຄ້າມະນຸດ ດ້ວຍການປະກອບສ່ວນທາງດ້ານເຫື່ອແຮງ, ສະຕິປັນຍາ, ທຶນ, ວັດຖຸປະກອນ ແລະ ດ້ານອື່ນໆ.

**ມາດຕາ 6 ຫຼັກການກ່ຽວກັບວຽກງານຕ້ານການຄ້າມະນຸດ**

ວຽກງານຕ້ານການຄ້າມະນຸດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນຄວາມຖືກຕ້ອງ ແລະ ສອດຄ່ອງກັບ ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;

2. ດຳເນີນຄະດີ ໃຫ້ຖືກຕ້ອງ, ພາວະວິໄສ ແລະ ຍຸຕິທຳ;

3. ເຄົາລົບສິດ, ຜົນປະໂຫຍດອັນຊອບທຳ ແລະ ບໍ່ຈຳແນກຜູ້ຖືກເຄາະຮ້າຍ;

4. ມີສ່ວນຮ່ວມຂອງທຸກພາກສ່ວນ ທັງການຈັດຕັ້ງ ແລະ ບຸກຄົນ ໃນສັງຄົມ;

5. ຮັກສາຄວາມລັບຂອງຜູ້ຖືກເຄາະຮ້າຍ ແລະ ປົກປ້ອງຜູ້ໃຫ້ຂໍ້ມູນ;

6. ຮ່ວມມືກັບສາກົນ ບົນພື້ນຖານຄວາມສະເໝີພາບ, ເຄົາລົບເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງກັນ ແລະ ກັນ ແລະ ສອດຄ່ອງກັບສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 7 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນພາຍໃນ ແລະຕ່າງປະເທດທີ່ອາໄສ ຫຼື ເຄື່ອນໄຫວ ຢູ່ໃນ ແລະ ນອກດິນແດນຂອງ ສປປ ລາວ.

**ມາດຕາ 8 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານຕ້ານການຄ້າມະນຸດ ດ້ວຍຫຼາຍຮູບການ ແລະ ເນື້ອໃນ ເຊັ່ນ ແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຊີ, ຍົກລະດັບຄວາມຮູ້, ຄວາມສາມາດໃຫ້ພະນັກງານທີ່ກ່ຽວຂ້ອງ, ຍາດແຍ່ງການຊ່ວຍເຫຼືອ ແລະ ປະຕິບັດສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ການຄ້າມະນຸດ
## ໝວດທີ 1
## ອົງປະກອບຂອງການຄ້າມະນຸດ

**ມາດຕາ 9 ອົງປະກອບຂອງການຄ້າມະນຸດ**

ອົງປະກອບຂອງການຄ້າມະນຸດ ມີ ດັ່ງນີ້:

1. ການກະທຳ;
2. ວິທີການ;
3. ຈຸດປະສົງ.

ສຳລັບ ການກະທຳຜິດຕໍ່ເດັກທີ່ມີອາຍຸຕໍ່າກວ່າ ສິບແປດປີ ພຽງແຕ່ມີການກະທຳ ແລະ ຈຸດປະສົງ ເທົ່ານັ້ນ ກໍຖືວ່າເປັນການຄ້າມະນຸດ ເຖິງວ່າຈະມີການຍິນຍອມ ຫຼື ມີຄວາມສະໝັກໃຈກໍຕາມ.

**ມາດຕາ 10 ການກະທຳ**

ການກະທຳ ແມ່ນ ການຊອກຫາ, ການລັກພາຕົວ, ການເຄື່ອນຍ້າຍ, ການຂົນສົ່ງ ຫຼື ນຳສົ່ງ, ການຮັບເອົາຄົນຢູ່ພາຍໃນ ຫຼື ຕ່າງປະເທດ, ການໃຫ້ບ່ອນພັກເຊົາ ຫຼື ລີ້ຊ່ອນ ຫຼື ການກະທຳອື່ນ ທີ່ພົວພັນເຖິງການຄ້າມະນຸດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງກົດໝາຍສະບັບນີ້.

**ມາດຕາ 11 ວິທີການ**

ວິທີການ ແມ່ນ ການຂົ່ມຂູ່, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ, ຍຸຍົງ, ສວຍໃຊ້ອຳນາດ, ບັງຄັບ, ນາບຂູ່, ຜູກມັດດ້ວຍໜີ້ສິນ, ເອົາເດັກມາລ້ຽງ ຫຼື ເອົາເດັກເປັນລູກລ້ຽງແອບແຝງ, ໝັ້ນໝາຍແອບແຝງ, ແຕ່ງດອງແອບແຝງ, ໃຫ້ຖືພາ, ຂໍທານ ແລະ ຖ່າຍຮູບພາບ, ສະແດງ, ເຜີຍແຜ່ສິ່ງລາມົກ ແລະ ວິທີການອື່ນ.

**ມາດຕາ 12 ຈຸດປະສົງ**

ຈຸດປະສົງ ແມ່ນ ເພື່ອຂູດຮີດແຮງງານ, ຂູດຮີດທາງເພດ, ເອົາເປັນຂ້າທາດ, ຄ້າໂສເພນີ, ບັງຄັບໃຫ້ເປັນໂສເພນີ, ເອົາອະໄວຍະວະຕ່າງໆຂອງຮ່າງກາຍໄປຂາຍ ແລະ ຈຸດປະສົງອື່ນ ທີ່ຂັດກັບກົດໝາຍ ແລະ ວັດທະນະທຳອັນດີງາມຂອງຊາດ.

## ໝວດທີ 2
## ຜົນກະທົບຂອງການຄ້າມະນຸດ

**ມາດຕາ 13 ຜົນກະທົບຂອງການຄ້າມະນຸດ**

ການຄ້າມະນຸດ ມີຜົນກະທົບຕໍ່ຜູ້ຖືກເຄາະຮ້າຍ ດັ່ງນີ້:

1. ຜົນກະທົບຕໍ່ຮ່າງກາຍ;
2. ຜົນກະທົບຕໍ່ຈິດໃຈ;
3. ຜົນກະທົບທາງເພດ;
4. ຜົນກະທົບຕໍ່ຊັບສິນ ຫຼື ເສດຖະກິດ;
5. ຜົນກະທົບຕໍ່ສັງຄົມ.

**ມາດຕາ 14 ຜົນກະທົບຕໍ່ຮ່າງກາຍ**

ຜົນກະທົບຕໍ່ຮ່າງກາຍ ແມ່ນ ການບາດເຈັບ, ບວບຊ້ຳ ພາຍໃນ ຫຼື ພາຍນອກຮ່າງກາຍ ແລະ ມັນສະໝອງ, ເສຍອົງຄະ, ພິການ, ຕິດເຊື້ອພະຍາດ, ເປັນບ້າ ຫຼື ເສຍຊີວິດ ຊຶ່ງເກີດຈາກການກະທຳຂອງການຄ້າມະນຸດ.

**ມາດຕາ 15 ຜົນກະທົບຕໍ່ຈິດໃຈ**

ຜົນກະທົບຕໍ່ຈິດໃຈ ແມ່ນ ການປ່ຽນແປງດ້ານອາລົມ ເຊັ່ນ ກັງວົນ, ຫງຸດຫງິດ, ໃຈຮ້າຍ, ແຂງກະດ້າງ, ໂມໂຫ, ຊຶມເສົ້າ, ລະແວງສົງໄສ, ຢ້ານກົວ, ເຫັນພາບຫຼອກຫຼອນ, ຄວບຄຸມຕົນເອງບໍ່ໄດ້, ມີບັນຫາດ້ານການປັບຕົວ, ມີບຸກຄະລິກກະພາບແບບຍິນຍອມ ຫຼື ອາໄສແຕ່ຜູ້ອື່ນ, ມີປົມດ້ອຍຕິດຕົວ, ຄິດວ່າຕົນເອງບໍ່ຄືໝູ່, ຮູ້ສຶກຜິດ, ຕົນເອງບໍ່ດີ, ຕົນເອງບໍ່ມີຄຸນຄ່າ, ບໍ່ເປັນມິດກັບໃຜ, ມັກຢູ່ຄົນດຽວ, ແຍກຕົນອອກຈາກໝູ່ຄູ່, ຖືກປ່ອຍປະ, ຖືກຈຳແນກຈາກສັງຄົມ, ອັບອາຍ, ເສຍຈິດ, ເສຍໃຈ, ເສຍກຽດສັກສີ, ມີອາລົມຈິດທາງເພດ, ສູນເສຍຄວາມຊົງຈຳ, ບໍ່ນັບຖືຕົນເອງ, ມັກທຳຮ້າຍຕົນເອງ ອາດນຳໄປສູ່ການຂ້າຕົວຕາຍ ຊຶ່ງເກີດຈາກການກະທຳຂອງການຄ້າມະນຸດ.

**ມາດຕາ 16 ຜົນກະທົບທາງເພດ**

ຜົນກະທົບທາງເພດ ແມ່ນ ອະໄວຍະວະສືບພັນຖືກທຳລາຍ, ມີຄວາມສ່ຽງສູງຕໍ່ການຕິດເຊື້ອພະຍາດຕິດຕໍ່ທາງເພດສຳພັນ ເປັນຕົ້ນ ເຮສໄອວີ, ໄວຣັດຕັບ, ຖືພາໂດຍບໍ່ຕັ້ງໃຈ ແລະ ບໍ່ປອດໄພ, ມີພຶດຕິກຳທາງເພດທີ່ບໍ່ເໝາະສົມ, ການຈະເລີນເຕີບໂຕທາງຮ່າງກາຍ ແລະ ເພດຜິດປົກກະຕິ ຊຶ່ງເກີດຈາກການກະທຳຂອງການຄ້າມະນຸດ.

**ມາດຕາ 17 ຜົນກະທົບຕໍ່ຊັບສິນ ຫຼື ເສດຖະກິດ**

ຜົນກະທົບຕໍ່ຊັບສິນ ຫຼື ເສດຖະກິດ ແມ່ນ ຄວາມເສັຍຫາຍຕໍ່ຊັບສິນຂອງຜູ້ຖືກເຄາະຮ້າຍເຮັດໃຫ້ເສຍອະນາຄົດ, ເສຍໂອກາດໃນການສ້າງລາຍໄດ້ ຫຼື ຜົນປະໂຫຍດອື່ນ ເປັນຕົ້ນ ການບໍ່ໄດ້ຮັບຄ່າແຮງງານ, ໄດ້ຮັບຄ່າແຮງງານບໍ່ສົມກັບການອອກແຮງງານ, ບໍ່ໄດ້ຮັບສະຫວັດດີການສັງຄົມ, ເຮັດໃຫ້ມີໜີ້ສິນ, ບໍ່ມີອາຊີບໝັ້ນຄົງ, ສູນເສຍຊັບສິນສ່ວນຕົວ ແລະ ຄອບຄົວ, ເຮັດໃຫ້ຂາດກຳລັງແຮງງານໃນການພັດທະນາເສດຖະກິດຂອງຊາດ ຊຶ່ງເກີດຈາກການກະທຳຂອງການຄ້າມະນຸດ.

**ມາດຕາ 18 ຜົນກະທົບຕໍ່ສັງຄົມ**

ຜົນກະທົບຕໍ່ສັງຄົມ ແມ່ນ ປາກົດການຫຍໍ້ທໍ້ ແລະ ອາຊະຍາກຳທີ່ທຳລາຍ ວັດທະນະທຳ, ຮີດຄອງ ປະເພນີອັນດີງາມຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຊຶ່ງເກີດຈາກການກະທຳຂອງການຄ້າມະນຸດ.

# ພາກທີ III
# ການຕ້ານການຄ້າມະນຸດ
## ໝວດທີ 1
## ການປ້ອງກັນ

**ມາດຕາ 19 ການປ້ອງກັນ**

ການປ້ອງກັນການຄ້າມະນຸດ ແມ່ນ ການນຳໃຊ້ ວິທີການ, ມາດຕະການ ສຶກສາອົບຮົມ, ເສດຖະກິດ, ກົດໝາຍ ແລະ ລະບຽບການ ເພື່ອບໍ່ໃຫ້ເກີດມີການຄ້າມະນຸດ.

ວຽກງານປ້ອງກັນການຄ້າມະນຸດ ມີ ດັ່ງນີ້:

1. ການປູກຈິດສຳນຶກກ່ຽວກັບການຄ້າມະນຸດ;
2. ການສ້າງຄວາມເຂັ້ມແຂງໃຫ້ການຈັດຕັ້ງທີ່ກ່ຽວຂ້ອງ;
3. ການເກັບກຳແລະ ຄົ້ນຄວ້າຂໍ້ມູນ;
4. ການປ້ອງກັນການຄ້າມະນຸດໂດຍບຸກຄົນ;
5. ການປ້ອງກັນການຄ້າມະນຸດໂດຍຄອບຄົວ;
6. ການປ້ອງກັນການຄ້າມະນຸດໂດຍການຈັດຕັ້ງ ແລະ ສັງຄົມ;
7. ການປ້ອງກັນການຄ້າມະນຸດໂດຍລັດ.

**ມາດຕາ 20 ການປູກຈິດສຳນຶກກ່ຽວກັບການຄ້າມະນຸດ**

ການປູກຈິດສຳນຶກກ່ຽວກັບການຄ້າມະນຸດ ເປັນວຽກງານໜຶ່ງທີ່ສຳຄັນຂອງລັດ, ຂອງບຸກຄົນ, ນິຕິບຸກຄົນ ແລະ ທຸກພາກສ່ວນໃນສັງຄົມ ເພື່ອເຮັດໃຫ້ທົ່ວປວງຊົນຮັບຮູ້ ແລະ ເຂົ້າໃຈ ແນໃສ່ປ່ຽນແປງດ້ານການປະພຶດ, ວັດທະນະທຳ, ຮີດຄອງປະເພນີ, ຄວາມເຊື່ອຖື, ທັດສະນະຄະຕິທີ່ເປັນການໝິ່ນປະໝາດ ແລະ ຈຳແນກມະນຸດດ້ວຍກັນ; ເຮັດໃຫ້ສັງຄົມເຫັນໄດ້ຜົນຮ້າຍ ແລະ ຄວາມເປັນອັນຕະລາຍຂອງການຄ້າມະນຸດ ເພື່ອມີສະຕິລະວັງຕົວບໍ່ໃຫ້ຕົກເປັນເຫຍື່ອ ຫຼື ຜູ້ຖືກເຄາະຮ້າຍຂອງອາຊະຍາກຳດັ່ງກ່າວ.

ການປູກຈິດສຳນຶກກ່ຽວກັບການຄ້າມະນຸດ ດຳເນີນດ້ວຍຫຼາຍຮູບການ ແລະ ວິທີການ ເປັນຕົ້ນ ເຊື່ອມສານເຂົ້າໃນການສຶກສາ, ການໂຄສະນາເຜີຍແຜ່ທາງກວ້າງ, ທາງເລິກ ແລະ ການສ້າງກິດຈະກຳຕ່າງໆ ກ່ຽວກັບການຕ້ານການຄ້າມະນຸດ.

**ມາດຕາ 21 ການສ້າງຄວາມເຂັ້ມແຂງໃຫ້ການຈັດຕັ້ງທີ່ກ່ຽວຂ້ອງ**

ການສ້າງຄວາມເຂັ້ມແຂງໃຫ້ການຈັດຕັ້ງທີ່ຮັບຜິດຊອບວຽກງານຕ້ານການຄ້າມະນຸດ ດໍາເນີນດ້ວຍ ການບໍາລຸງ ສ້າງ, ຈັດຝຶກອົບຮົມ, ສໍາມະນາ, ແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານກ່ຽວກັບວຽກງານດັ່ງກ່າວ ພ້ອມທັງປະຕິບັດລະບອບສ່ອງແສງລາຍງານກ່ຽວກັບການເຄື່ອນໄຫວວຽກງານຕ້ານການຄ້າມະນຸດຕາມຂອບເຂດຄວາມຮັບຜິດຊອບຂອງຕົນຕໍ່ສາຍຕັ້ງ ແລະ ສາຍຂວາງຢ່າງເປັນປົກກະຕິ.

ລັດ ແລະ ສັງຄົມ ສະໜອງງົບປະມານ, ທຶນ, ປະກອບບຸກຄະລາກອນ, ວັດຖຸປະກອນ ແລະ ພາຫະນະໃຫ້ແກ່ວຽກງານຕ້ານການຄ້າມະນຸດຢ່າງເໝາະສົມ.

**ມາດຕາ 22 ການເກັບກໍາແລະ ຄົ້ນຄວ້າຂໍ້ມູນ**

ການ ເກັບກໍາ ແລະ ຄົ້ນຄວ້າຂໍ້ມູນ ໃຊ້ເປັນຂໍ້ມູນພື້ນຖານໃຫ້ແກ່ການກໍານົດນະໂຍບາຍ, ສ້າງ ຫຼື ປັບປຸງກົດໝາຍ, ລະບຽບການ ແລະ ແຜນການກ່ຽວກັບວຽກງານຕ້ານການຄ້າມະນຸດ.

**ມາດຕາ 23 ການປ້ອງກັນການຄ້າມະນຸດໂດຍບຸກຄົນ**

ພົນລະເມືອງທຸກຄົນ ຕ້ອງມີສະຕິລະວັງຕົວ ເພື່ອບໍ່ໃຫ້ຕົນຕົກເປັນເຫຍື່ອ ຫຼື ຜູ້ຖືກເຄາະຮ້າຍຂອງການຄ້າມະນຸດ, ພ້ອມກັນນັ້ນກໍຕ້ອງເປັນເຈົ້າການເຂົ້າຮ່ວມວຽກງານຕ້ານການຄ້າມະນຸດ.

**ມາດຕາ 24 ການປ້ອງກັນການຄ້າມະນຸດໂດຍຄອບຄົວ**

ແຕ່ລະຄອບຄົວມີພັນທະ ສຶກສາອົບຮົມ, ດູແລໃຫ້ ຄວາມອົບອຸ່ນ, ການສຶກສາ, ຂໍ້ມູນແກ່ສະມາຊິກຄອບຄົວຂອງຕົນ ເພື່ອມີສະຕິລະວັງຕົວ ບໍ່ໃຫ້ຕົກເປັນເຫຍື່ອ ຫຼື ຜູ້ຖືກເຄາະຮ້າຍ ຂອງການຄ້າມະນຸດ; ໃຫ້ການຮ່ວມມືກັບ ບັນດາອົງການ, ການຈັດຕັ້ງທີ່ກ່ຽວຂ້ອງຂອງລັດ, ລວມໝູ່ ແລະ ເອກະຊົນ ກ່ຽວກັບວຽກງານຕ້ານການຄ້າມະນຸດ.

**ມາດຕາ 25 ການປ້ອງກັນການຄ້າມະນຸດໂດຍການຈັດຕັ້ງ ແລະ ສັງຄົມ**

ການຈັດຕັ້ງ ແລະ ສັງຄົມ ມີໜ້າທີ່ ເຜີຍແຜ່, ສຶກສາອົບຮົມ, ປູກຈິດສໍານຶກ ກ່ຽວກັບວຽກງານຕ້ານການຄ້າມະນຸດໃຫ້ສະມາຊິກທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ, ປະສານສົມທົບ, ຮ່ວມມື ແລະ ຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການໃຫ້ມີປະສິດທິຜົນ.

**ມາດຕາ 26 ການປ້ອງກັນການຄ້າມະນຸດໂດຍລັດ**

ລັດ ກໍານົດນະໂຍບາຍ, ກົດໝາຍ, ລະບຽບການ, ກົນໄກ ແລະ ມາດຕະການຕ່າງໆ ຢ່າງເປັນລະບົບ ກ່ຽວກັບວຽກງານຕ້ານການຄ້າມະນຸດ ພ້ອມທັງສະໜອງງົບປະມານ, ປະກອບ ບຸກຄະລາກອນ, ພາຫະນະ, ວັດຖຸປະກອນ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານດັ່ງກ່າວ.

## ໝວດທີ 2
## ການສະກັດກັ້ນການຄ້າມະນຸດ

**ມາດຕາ 27 ການສະກັດກັ້ນການຄ້າມະນຸດ**

ການສະກັດກັ້ນການຄ້າມະນຸດ ແມ່ນ ການນຳໃຊ້ວິທີການ, ມາດຕະການ ສຶກສາອົບຮົມ, ເສດຖະກິດ, ກົດໝາຍ ແລະ ລະບຽບການ ເພື່ອສະກັດກັ້ນບັນດາພຶດຕິກຳທີ່ກໍ່ໃຫ້ເກີດການຄ້າມະນຸດ.

ວຽກງານສະກັດກັ້ນການຄ້າມະນຸດ ມີ ດັ່ງນີ້:

1. ການຄວບຄຸມ;
2. ການຕິດຕາມ ແລະ ກວດກາເປົ້າໝາຍ;
3. ການເກືອດຫ້າມ.

**ມາດຕາ 28 ການຄວບຄຸມ**

ເຈົ້າໜ້າທີ່ກ່ຽວຂ້ອງເປັນຜູ້ນຳໃຊ້ວິທີການ ແລະ ມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ເພື່ອຄວບຄຸມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງບໍ່ໃຫ້ມີການເຄື່ອນໄຫວກໍ່ການກະທຳຜິດ ພ້ອມທັງຄຸ້ມຄອງກຸ່ມເປົ້າໝາຍທີ່ຈະຕົກເປັນເຫຍື່ອ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຫຼື ບໍ່ໃຫ້ເປັນຜູ້ຖືກເຄາະຮ້າຍຄືນໃໝ່.

**ມາດຕາ 29 ການຕິດຕາມ ແລະ ກວດກາເປົ້າໝາຍ**

ເຈົ້າໜ້າທີ່ກ່ຽວຂ້ອງເປັນຜູ້ ຕິດຕາມ ແລະ ກວດກາ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຊຶ່ງເປັນເປົ້າໝາຍເຄື່ອນໄຫວຄ້າມະນຸດ ໃນແຕ່ລະໄລຍະ.

ໃນກໍລະນີມີຂໍ້ມູນຫຼັກຖານໜັກແໜ້ນ ກໍສາມາດນຳໃຊ້ມາດຕະການສະກັດກັ້ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຢ່າງທັນການ.

**ມາດຕາ 30 ການເກືອດຫ້າມ**

ເຈົ້າໜ້າທີ່ກ່ຽວຂ້ອງເປັນຜູ້ນຳໃຊ້ວິທີການ, ມາດຕະການຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ເພື່ອເກືອດຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ບໍ່ໃຫ້ມີການເຄື່ອນໄຫວຄ້າມະນຸດ.

## ໝວດທີ 3
## ຂັ້ນຕອນການດຳເນີນຄະດີການຄ້າມະນຸດ

**ມາດຕາ 31 ຂັ້ນຕອນການດຳເນີນຄະດີການຄ້າມະນຸດ**

ການດຳເນີນຄະດີການຄ້າມະນຸດ ມີ ຂັ້ນຕອນ ດັ່ງນີ້:

1. ການແຈ້ງຄວາມ;
2. ການຮັບແຈ້ງຄວາມ;
3. ການເຮັດບົດບັນທຶກການແຈ້ງຄວາມ;
4. ການດຳເນີນຄະດີຕໍ່ຜູ້ກະທຳຜິດ;
5. ການຮ້ອງຂໍເອົາຄ່າເສຍຫາຍທາງແພ່ງ.

**ມາດຕາ 32 ການແຈ້ງຄວາມ**

ການແຈ້ງຄວາມກ່ຽວກັບການຄ້າມະນຸດ ສາມາດດຳເນີນໄດ້ທາງປາກເປົ່າ ຫຼື ເປັນລາຍລັກອັກສອນ. ຜູ້ມີສິດ ແລະ ພັນທະແຈ້ງຄວາມ ມີ ດັ່ງນີ້:

1. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ;

2. ສະມາຊິກຄອບຄົວຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ;

3. ຍາດພີ່ນ້ອງໃກ້ຊິດ, ບຸກຄົນໃກ້ຄຽງ, ບຸກຄົນອື່ນ, ອົງການຈັດຕັ້ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮູ້, ເຫັນ ຫຼື ໄດ້ຮັບຂໍ້ມູນ, ແຫຼ່ງຂ່າວ ກ່ຽວກັບການຄ້າມະນຸດ.

**ມາດຕາ 33 ການຮັບແຈ້ງຄວາມ**

ຜູ້ມີສິດຮັບແຈ້ງຄວາມກ່ຽວກັບການຄ້າມະນຸດ ແມ່ນ ເຈົ້າໜ້າທີ່ຕຳຫຼວດ.

ໃນກໍລະນີຈຳເປັນ, ຮີບດ່ວນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ກໍສາມາດຮັບແຈ້ງຄວາມ ແລ້ວລາຍງານໃຫ້ເຈົ້າໜ້າທີ່ຕຳຫຼວດໃນທັນໃດ ເພື່ອກອບກູ້, ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ດຳເນີນຄະດີໃສ່ຜູ້ຖືກຫາ ຕາມກົດໝາຍ.

**ມາດຕາ 34 ການເຮັດບົດບັນທຶກການແຈ້ງຄວາມ**

ໃນການຮັບແຈ້ງຄວາມແຕ່ລະເທື່ອນັ້ນ ເຈົ້າໜ້າທີ່ຕຳຫຼວດຜູ້ຮັບແຈ້ງຄວາມ ຕ້ອງເຮັດບົດບັນທຶກ ຊຶ່ງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ສະຖານທີ່, ວັນ, ເວລາ, ຊື່ ແລະ ນາມສະກຸນ, ຊັ້ນຕຳແໜ່ງຂອງຜູ້ຮັບແຈ້ງຄວາມ;

2. ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ບ່ອນຢູ່ ຫຼື ບ່ອນເຮັດວຽກຂອງຜູ້ຖືກເຄາະຮ້າຍ, ພໍ່ແມ່ຂອງຜູ້ຖືກເຄາະຮ້າຍ ແລະ ຜູ້ແຈ້ງຄວາມ;

3. ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ບ່ອນຢູ່ ຫຼື ບ່ອນເຮັດວຽກຂອງຜູ້ຖືກຫາ;

4. ການບັນທຶກເຫດການທີ່ເກີດຂຶ້ນ ຕາມການບອກເລົ່າຂອງຜູ້ແຈ້ງຄວາມ ເຊັ່ນ ເວລາ, ວັນເດືອນປີ, ສະຖານທີ່, ຜູ້ຮູ້ເຫັນນຳ, ຮ່ອງຮອຍ, ຮູບຖ່າຍທີ່ກ່ຽວຂ້ອງ ແລະ ຂໍ້ມູນຫຼັກຖານອື່ນ.

ພາຍຫຼັງທີ່ໄດ້ຮັບແຈ້ງຄວາມສຳເລັດແລ້ວ ຜູ້ຮັບແຈ້ງຄວາມຕ້ອງອ່ານເນື້ອໃນບົດບັນທຶກ ໃຫ້ຜູ້ມາແຈ້ງຄວາມ ແລະ ຜູ້ເຂົ້າຮ່ວມອື່ນຟັງ ພ້ອມທັງລົງລາຍເຊັນ ແລະ ແປະໂປ້ມື ໃສ່ບົດບັນທຶກດັ່ງກ່າວ.

**ມາດຕາ 35 ການດຳເນີນຄະດີຕໍ່ຜູ້ກະທຳຜິດ**

ເມື່ອມີການແຈ້ງຄວາມຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ມີການເຂົ້າມອບຕົວຂອງຜູ້ກະທຳຜິດ ຫຼື ພົບເຫັນຮ່ອງຮອຍຂອງການກະທຳຜິດ ກ່ຽວກັບການຄ້າມະນຸດແລ້ວ ເຈົ້າໜ້າທີ່ກ່ຽວຂ້ອງຕ້ອງກວດກາ, ຊັນນະສູດ, ເອົາຄຳໃຫ້ການຂອງຜູ້ຖືກເຄາະຮ້າຍ ຫຼື ຜູ້ແຈ້ງຄວາມ ລວມທັງພະຍານ, ນຳໃຊ້ວິທີການ ສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ພ້ອມທັງຮັກສາຄວາມລັບ ແລະ ຄວາມປອດໄພໃຫ້ພວກກ່ຽວ.

**ມາດຕາ 36 ການຮ້ອງຂໍເອົາຄ່າເສຍຫາຍທາງແພ່ງ**

ຜູ້ຖືກເຄາະຮ້າຍ ຫຼື ໂຈດທາງແພ່ງ ມີສິດຮ້ອງຂໍເອົາຄ່າເສຍຫາຍທາງແພ່ງ ໃນໄລຍະການດຳເນີນຄະດີ.

ນອກຈາກຄ່າເສຍຫາຍທາງແພ່ງແລ້ວ ການຈັດຕັ້ງທີ່ກ່ຽວຂ້ອງຕ້ອງໄດ້ໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອອັນຈຳເປັນແກ່ຜູ້ຖືກເຄາະຮ້າຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 44 ຂອງກົດໝາຍສະບັບນີ້ ແລະ ໃນຄຳຕັດສິນຂອງສານ.

## ໝວດທີ 4
## ການປົກປ້ອງຜູ້ຖືກເຄາະຮ້າຍ

**ມາດຕາ 37 ການກຳນົດຕົວຜູ້ຖືກເຄາະຮ້າຍ**

ການກຳນົດຕົວຜູ້ຖືກເຄາະຮ້າຍ ແມ່ນການຢັ້ງຢືນໂດຍເຈົ້າໜ້າທີ່ສະກັດກັ້ນ ແລະ ຕ້ານການຄ້າມະນຸດ ວ່າເປັນຜູ້ຖືກເຄາະຮ້າຍ.

**ມາດຕາ 38 ປະເພດຜູ້ຖືກເຄາະຮ້າຍ**

ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ມີ ສາມປະເພດ ດັ່ງນີ້:

1. ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດ ຢູ່ ສປປ ລາວ ແລະ ຖືກເຄາະຮ້າຍ ຢູ່ ສປປ ລາວ;
2. ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດ ຢູ່ ສປປ ລາວ ແຕ່ໄປຖືກເຄາະຮ້າຍຢູ່ຕ່າງປະເທດ;
3. ຄົນຢູ່ຕ່າງປະເທດ ແຕ່ມາຖືກເຄາະຮ້າຍ ຢູ່ ສປປ ລາວ.

**ມາດຕາ 39 ສິດຂອງຜູ້ຖືກເຄາະຮ້າຍ**

ຜູ້ຖືກເຄາະຮ້າຍ ມີ ສິດ ດັ່ງນີ້:

1. ຂໍຄວາມຊ່ວຍເຫຼືອຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ;
2. ແຈ້ງຄວາມຕໍ່ເຈົ້າໜ້າທີ່ກ່ຽວຂ້ອງ;
3. ໃຫ້ການກ່ຽວກັບຄະດີ;
4. ສະເໜີຂໍ້ມູນຫຼັກຖານ;
5. ຍື່ນຄຳຮ້ອງຂໍ;
6. ໄດ້ຮັບການທົດແທນຄ່າເສຍຫາຍ;
7. ບໍ່ຖືກດຳເນີນຄະດີອາຍາ ແລະ ບໍ່ຖືກກັກຂັງໃນສະຖານເປັນໂສເພນີ, ເຂົ້າ-ອອກເມືອງຜິດກົດໝາຍ;
8. ໄດ້ຮັບການປົກປ້ອງ ແລະ ຊ່ວຍເຫຼືອ ເພື່ອຮັບປະກັນຄວາມປອດໄພຂອງຕົນ;
9. ບໍ່ຖືກຖ່າຍຮູບ, ບັນທຶກພາບ ເພື່ອເຜີຍແຜ່ ຊຶ່ງຈະພາໃຫ້ເສຍກຽດສັກສີ ແລະ ຊື່ສຽງ;
10. ໄດ້ຮັບການຊ່ວຍເຫຼືອດ້ານ ບ່ອນພັກເຊົາ, ກົດໝາຍ, ການແພດ, ການສຶກສາ ແລະ ຝຶກອົບຮົມວິຊາຊີບ, ເສດຖະກິດ, ການກັບຄືນສູ່ຄອບຄົວ ແລະ ສັງຄົມ;
11. ເບິ່ງເອກະສານຢູ່ໃນສຳນວນຄະດີ, ອັດສຳເນົາ ຫຼື ຈົດກ່າຍເອົາເນື້ອໃນທີ່ຈຳເປັນອອກຈາກສຳນວນຄະດີ ຫຼັງຈາກສິ້ນສຸດການສືບສວນ-ສອບສວນ;
12. ເຂົ້າຮ່ວມການໄຕ່ສວນຄະດີໃນທີ່ປະຊຸມສານ;
13. ສະເໜີຄ້ານຕົວຜູ້ດຳເນີນຄະດີອາຍາ;
14. ຮ້ອງຟ້ອງ, ຂໍອຸທອນ, ຂໍລົບລ້າງ ນິຕິກຳ ຫຼື ຄຳສັ່ງຂອງເຈົ້າໜ້າທີ່ສະກັດກັ້ນ ແລະ ຕ້ານການຄ້າມະນຸດ, ຫົວໜ້າອົງການໄອຍະການປະຊາຊົນ, ພະນັກງານໄອຍະການປະຊາຊົນ ຫຼື ປະທານ ສານປະຊາຊົນ, ຜູ້ພິພາກສາ ທີ່ຕົນເຫັນວ່າບໍ່ຖືກຕ້ອງ;
15. ເອົາຜູ້ແປພາສາ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນໃນການຕໍ່ສູ້ຄະດີ;
16. ໄດ້ຮັບສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ໃນກໍລະນີທີ່ຜູ້ຖືກເຄາະຮ້າຍຫາກໄດ້ເສຍຊີວິດ ຍາດພີ່ນ້ອງໃກ້ຊິດຂອງຜູ້ກ່ຽວຈະເປັນຜູ້ໃຊ້ສິດແທນ ຕາມທີ່ໄດ້ກໍານົດໄວ້ໃນມາດຕານີ້.

**ມາດຕາ 40 ການກອບກູ້ເອົາຜູ້ຖືກເຄາະຮ້າຍ**

ເມື່ອໄດ້ຮັບແຈ້ງຄວາມ ຫຼື ມີຂໍ້ມູນວ່າບຸກຄົນ, ກຸ່ມຄົນໃດໜຶ່ງຖືກຄ້າມະນຸດແລ້ວ ເຈົ້າໜ້າທີ່ຕໍາຫຼວດ, ທະຫານຊາຍແດນ, ເຈົ້າໜ້າທີ່ສະຖານທູດ ຫຼື ສະຖານກົງສຸນ ຕ້ອງເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງນໍາໃຊ້ວິທີການ ແລະ ມາດຕະການກອບກູ້ເອົາຜູ້ຖືກເຄາະຮ້າຍ ພ້ອມທັງເກັບກໍາຂໍ້ມູນ ຫຼັກຖານທີ່ຈໍາເປັນ ເພື່ອຮັບໃຊ້ໃຫ້ແກ່ການດໍາເນີນຄະດີ; ໃນກໍລະນີບຸກຄົນນັ້ນ ຫາກຖືກທໍາຮ້າຍຮ່າງກາຍ ຫຼື ຕົກຢູ່ໃນສະພາບອັນຕະລາຍຕໍ່ຊີວິດ, ສຸຂະພາບ ຫຼື ອາດຈະຖືກລ່ວງລະເມີດເສລີພາບ, ກຽດສັກສີ ແລະ ຊັບສິນ ເຈົ້າໜ້າທີ່ກ່ຽວຂ້ອງດັ່ງກ່າວເທິງນີ້ ຕ້ອງໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອຜູ້ກ່ຽວ ຢ່າງທັນການ.

ໃນກໍລະນີຈໍາເປັນ ຮີບດ່ວນ ຜູ້ຮັບແຈ້ງຄວາມ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 33 ຂອງກົດໝາຍສະບັບນີ້ ກໍຕ້ອງກອບກູ້ເອົາຜູ້ຖືກເຄາະຮ້າຍ.

**ມາດຕາ 41 ການສົ່ງຕໍ່ຜູ້ຖືກເຄາະຮ້າຍ**

ພາຍຫຼັງໄດ້ກໍານົດຕົວວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດແລ້ວ ຕ້ອງນໍາສົ່ງຜູ້ກ່ຽວໄປຍັງບ່ອນພັກເຊົາຊົ່ວຄາວທີ່ປອດໄພ ເພື່ອສືບຕໍ່ໃຫ້ການຊ່ວຍເຫຼືອອັນຈໍາເປັນໃນດ້ານຕ່າງໆ.

ສໍາລັບການສົ່ງຕໍ່ຜູ້ຖືກເຄາະຮ້າຍນັ້ນ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 42 ການຮັກສາຄວາມປອດໄພ**

ຜູ້ຖືກເຄາະຮ້າຍ ແລະ ບຸກຄົນໃກ້ຊິດຂອງຜູ້ກ່ຽວ ໄດ້ຮັບການຮັກສາຄວາມປອດໄພ ດັ່ງນີ້:

1. ປ້ອງກັນບ່ອນຢູ່ອາໄສ, ບ່ອນເຮັດວຽກ, ບ່ອນຮຽນ, ບ່ອນໄປ, ບ່ອນມາ, ຢູ່ໃນສານ ແລະ ບ່ອນອື່ນທີ່ຈໍາເປັນ;
2. ຄຸ້ມຄອງ, ດູແລ ການໄປ, ການມາ ແລະ ການພົວພັນ;
3. ໃຫ້ບ່ອນພັກເຊົາຊົ່ວຄາວທີ່ປອດໄພ;
4. ໃຫ້ບ່ອນຢູ່, ບ່ອນເຮັດວຽກ, ບ່ອນຮຽນ ໃໝ່ໃນກໍລະນີບໍ່ສາມາດກັບຄືນສູ່ຄອບຄົວເດີມໄດ້ຍ້ອນສາເຫດອັນຈໍາເປັນ;
5. ນໍາໃຊ້ວິທີການປ້ອງກັນ, ສະກັດກັ້ນການກະທໍາທີ່ຈະເປັນການລ່ວງລະເມີດ ຫຼື ນາບຂູ່ຕໍ່ຊີວິດ, ເສລີພາບ, ກຽດສັກສີ ແລະ ຊັບສິນຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 43 ການຮັກສາຄວາມລັບ**

ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງທີ່ກ່ຽວຂ້ອງ ຕ້ອງຮັກສາຄວາມລັບທີ່ພົວພັນເຖິງຜູ້ຖືກເຄາະຮ້າຍ ແລະ ບຸກຄົນໃກ້ຊິດຂອງຜູ້ກ່ຽວ ດັ່ງນີ້:

1. ຂໍ້ມູນ, ຫຼັກຖານ ທີ່ພົວພັນກັບຄະດີ;
2. ປະຫວັດ ແລະ ຈຸດພິເສດທາງດ້ານຮ່າງກາຍ;
3. ບ່ອນພັກເຊົາຊົ່ວຄາວ, ບ່ອນຢູ່, ບ່ອນເຮັດວຽກ ແລະ ບ່ອນຮຽນ.

## ໝວດທີ 5
## ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ

**ມາດຕາ 44 ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ**

ຜູ້ຖືກເຄາະຮ້າຍ ຕ້ອງໄດ້ຮັບການຊ່ວຍເຫຼືອອັນຈຳເປັນໃນດ້ານຕ່າງໆ ດັ່ງນີ້:

1. ການພັກເຊົາ;
2. ກົດໝາຍ;
3. ການແພດ;
4. ການສຶກສາ ແລະ ຝຶກອົບຮົມວິຊາຊີບ;
5. ເສດຖະກິດ;
6. ການກັບຄືນສູ່ຄອບຄົວ ແລະ ສັງຄົມ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໃຫ້ການຊ່ວຍເຫຼືອ ແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຕ້ອງໄດ້ຮັບການຄຸ້ມຄອງ ແລະ ປົກປ້ອງຕາມກົດໝາຍ.

**ມາດຕາ 45 ການຊ່ວຍເຫຼືອດ້ານການພັກເຊົາ**

ການຊ່ວຍເຫຼືອດ້ານການພັກເຊົາທີ່ປອດໄພ ລວມມີ ບ່ອນພັກເຊົາ, ອາຫານ, ເຄື່ອງນຸ່ງຫົ່ມ, ຢາປົວພະຍາດ ແລະ ເຄື່ອງໃຊ້ສອຍອັນຈຳເປັນໃນຊີວິດປະຈຳວັນແກ່ຜູ້ຖືກເຄາະຮ້າຍ.

**ມາດຕາ 46 ການຊ່ວຍເຫຼືອດ້ານກົດໝາຍ**

ການຊ່ວຍເຫຼືອດ້ານກົດໝາຍ ລວມມີ ການໃຫ້ຄຳປຶກສາ, ຄຳແນະນຳ, ການພິສູດສັນຊາດ, ການປະກອບເອກະສານ ເພື່ອອອກບັດປະຈຳຕົວ, ສຳມະໂນຄົວ, ເອກະສານເດີນທາງ, ການຮ້ອງຂໍເອົາ

ຄ່າເສຍຫາຍທາງແພ່ງ, ການເຂົ້າຮ່ວມໃນການດຳເນີນຄະດີ, ການແຕ່ງຕັ້ງທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ເປັນຕົວແທນໃນການຕໍ່ສູ້ຄະດີ ໂດຍບໍ່ເສັຍຄ່າ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ຖືກເຄາະຮ້າຍ ພ້ອມທັງການກຽມຄວາມພ້ອມໃຫ້ແກ່ຜູ້ຖືກເຄາະຮ້າຍໃນການດຳເນີນຄະດີ.

ໃນກໍລະນີຜູ້ຖືກເຄາະຮ້າຍບໍ່ຮູ້ພາສາລາວ ຕ້ອງໄດ້ຮັບການຊ່ວຍເຫຼືອໃຫ້ມີຜູ້ແປພາສາ ລວມທັງການແປເອກະສານທາງກົດໝາຍທີ່ຈຳເປັນ.

**ມາດຕາ 47 ການຊ່ວຍເຫຼືອດ້ານການແພດ**

ຜູ້ຖືກເຄາະຮ້າຍ ມີສິດໄດ້ຮັບການຊ່ວຍເຫຼືອດ້ານການແພດ ດັ່ງນີ້:

1. ໄດ້ຮັບຄຳປຶກສາ, ຄຳແນະນຳດ້ານສຸຂະພາບຈິດ ແລະ ຈິດບຳບັດ;
2. ໄດ້ຮັບການກວດ, ປິ່ນປົວ, ຍັ້ງຢືນສຸຂະພາບ ແລະ ຍັ້ງຢືນອາຍຸ.

ໃນກໍລະນີທີ່ແພດໝໍຫາກພົບເຫັນ ຫຼື ສົງໄສວ່າບຸກຄົນທີ່ເຂົ້າມາໃຊ້ບໍລິການດ້ານການແພດນຳຕົນນັ້ນ ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຕ້ອງລາຍງານຕໍ່ເຈົ້າໜ້າທີ່ສະກັດກັ້ນ ແລະ ຕ້ານການຄ້າມະນຸດໃນທັນໃດ ຫຼື ນຳສົ່ງຜູ້ກ່ຽວໄປໃຫ້ໜ່ວຍງານສະເພາະ ທີ່ຮັບຜິດຊອບການບໍລິການດ້ານການແພດແກ່ຜູ້ຖືກເຄາະຮ້າຍ.

ໃນກໍລະນີທີ່ຜູ້ຖືກເຄາະຮ້າຍຫາກໄດ້ຮັບຜົນສະທ້ອນທີ່ຮ້າຍແຮງ ເປັນຕົ້ນ ພິການ, ເສຍອົງຄະ, ຕິດເຊື້ອເຮສໄອວີ ຕ້ອງມອບໃຫ້ພາກສ່ວນທີ່ກ່ຽວຂ້ອງສືບຕໍ່ໃຫ້ການຊ່ວຍເຫຼືອ.

ຜົນກວດດ້ານການແພດ ແລະ ຂໍ້ມູນອື່ນຂອງຜູ້ຖືກເຄາະຮ້າຍ ຕ້ອງໄດ້ຮັກສາເປັນຄວາມລັບ ແລະ ຕ້ອງມອບໃຫ້ອົງການດຳເນີນຄະດີ ແລະ ອົງການຂອງລັດທີ່ເຮັດໜ້າທີ່ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ.

**ມາດຕາ 48 ການຊ່ວຍເຫຼືອດ້ານການສຶກສາ ແລະ ຝຶກອົບຮົມວິຊາຊີບ**

ຜູ້ຖືກເຄາະຮ້າຍທີ່ເປັນເດັກ ຫຼື ເດັກທີ່ຕິດຕາມມານຳຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍທີ່ກຳລັງຮຽນຢູ່ ຕ້ອງໄດ້ຮັບນະໂຍບາຍໃນການສືບຕໍ່ສຶກສາຢູ່ໂຮງຮຽນ ຫຼື ສະຖານການສຶກສາເດີມ ຫຼື ຢູ່ໂຮງຮຽນ ຫຼື ສະຖານການສຶກສາອື່ນທີ່ມີຄວາມປອດໄພ.

ສຳລັບຜູ້ຖືກເຄາະຮ້າຍທີ່ບໍ່ມີເງື່ອນໄຂສຶກສາຕໍ່ ກໍໄດ້ຮັບການບຳລຸງຍົກລະດັບ ຕິດພັນກັບການຝຶກອົບຮົມວິຊາຊີບໃດໜຶ່ງ ເພື່ອໃຫ້ຜູ້ກ່ຽວມີວຽກເຮັດງານທຳ, ມີລາຍຮັບ ແລະ ຍົກລະດັບຊີວິດການເປັນຢູ່ໃຫ້ດີຂຶ້ນ.

**ມາດຕາ 49 ການຊ່ວຍເຫຼືອດ້ານເສດຖະກິດ**

ຜູ້ຖືກເຄາະຮ້າຍທີ່ທຸກຍາກ ຫຼື ບໍ່ມີເງື່ອນໄຂທາງດ້ານເສດຖະກິດ ຈະໄດ້ຮັບການຊ່ວຍເຫຼືອດ້ານເສດຖະກິດຈາກອົງການ, ຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເປັນຕົ້ນ ການຊ່ວຍເຫຼືອເບື້ອງຕົ້ນ

ດ້ານການເງິນ, ການເຂົ້າຫາແຫຼ່ງທຶນ ຫຼື ການປະກອບອາຊີບໃດໜຶ່ງ ເພື່ອໃຫ້ຜູ້ກ່ຽວສາມາດເຄື່ອນໄຫວຫາລ້ຽງຊີບ ແລະ ກຸ້ມຕົນເອງທາງດ້ານເສດຖະກິດ.

**ມາດຕາ 50 ການຊ່ວຍເຫຼືອກັບຄືນສູ່ຄອບຄົວ ແລະ ສັງຄົມ**

ກ່ອນນຳສົ່ງຜູ້ຖືກເຄາະຮ້າຍກັບຄືນສູ່ຄອບຄົວ ແລະ ສັງຄົມ ກອງເລຂາຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ຕ້ອງປະຕິບັດ ດັ່ງນີ້:

1. ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ບ່ອນຜູ້ຖືກເຄາະຮ້າຍອາໄສຢູ່ ເພື່ອຊອກຫາຄອບຄົວ, ຜູ້ປົກຄອງ, ຍາດພີ່ນ້ອງ ສຶກສາເບິ່ງເງື່ອນໄຂ, ຄວາມກຽມພ້ອມໃນການຮັບເອົາຜູ້ຖືກເຄາະຮ້າຍລວມທັງຄວາມເໝາະສົມຂອງຜູ້ກ່ຽວໃນການກັບຄືນສູ່ຄອບຄົວ ແລະ ສັງຄົມ;
2. ນຳສົ່ງຜູ້ຖືກເຄາະຮ້າຍໃຫ້ຄອບຄົວ, ຜູ້ປົກຄອງ ຫຼື ຍາດພີ່ນ້ອງ ແລະ ອົງການປົກຄອງບ້ານ, ພາກສ່ວນທີ່ກ່ຽວຂ້ອງ ສືບຕໍ່ຕິດຕາມ ແລະ ໃຫ້ການຊ່ວຍເຫຼືອຜູ້ກ່ຽວ.

ໃນກໍລະນີທີ່ຜູ້ຖືກເຄາະຮ້າຍ ຫາກບໍ່ສາມາດກັບຄືນສູ່ຄອບຄົວໄດ້ຍ້ອນສາເຫດອັນຈຳເປັນ, ກອງເລຂາຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ຕ້ອງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອສືບຕໍ່ຫາວິທີໃຫ້ການຊ່ວຍເຫຼືອແກ່ຜູ້ກ່ຽວ ຢ່າງເໝາະສົມ.

## ໝວດທີ 6
## ການຮ່ວມມືສາກົນໃນການຕ້ານການຄ້າມະນຸດ

**ມາດຕາ 51 ການຮ່ວມມືສາກົນໃນການຕ້ານການຄ້າມະນຸດ**

ການຈັດຕັ້ງຂອງລັດ ມີສິດຮ່ວມມືກັບອົງການຂອງຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ທີ່ກ່ຽວຂ້ອງ ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ເຈົ້າໜ້າທີ່, ການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ ແລະ ເຕັກໂນໂລຊີ ກ່ຽວກັບການຕ້ານການຄ້າມະນຸດ.

ການປະສານງານລະຫວ່າງອົງການທີ່ກ່ຽວຂ້ອງຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກັບອົງການທີ່ກ່ຽວຂ້ອງຂອງຕ່າງປະເທດ ເພື່ອແກ້ໄຂບັນຫາການຄ້າມະນຸດນັ້ນ ໃຫ້ປະຕິບັດ ຕາມສັນຍາສາກົນ ແລະ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ.

ໃນກໍລະນີທີ່ ສປປ ລາວ ຫາກຍັງບໍ່ທັນໄດ້ເຊັນສັນຍາ ຫຼື ບໍ່ທັນໄດ້ເຂົ້າຮ່ວມເປັນພາຄີໃນສົນທິສັນຍານັ້ນ ໃຫ້ດຳເນີນການຮ່ວມມື ຕາມຫຼັກການຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ ແຕ່ບໍ່ໃຫ້ຂັດກັບລັດຖະທຳມະນູນ ແລະ ກົດໝາຍຂອງ ສປປ ລາວ.

**ມາດຕາ 52 ການຮ່ວມມືໃນການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍກັບຄືນປະເທດ**

ລັດຖະບານ ແຫ່ງ ສປປ ລາວ ຮ່ວມມືໃນການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍກັບຄືນປະເທດ ດັ່ງນີ້:

1. ສ້າງເງື່ອນໄຂເພື່ອໃຫ້ອົງການທີ່ກ່ຽວຂ້ອງຂອງຕົນຮ່ວມມືກັບອົງການທີ່ກ່ຽວຂ້ອງຂອງຕ່າງປະເທດ ໃນການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ;

2. ໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອພົນລະເມືອງລາວ ທີ່ຖືກເຄາະຮ້າຍຢູ່ຕ່າງປະເທດກັບຄືນປະເທດ, ຮັບປະກັນຄວາມປອດໄພແກ່ຊີວິດ, ສຸຂະພາບ, ກຽດສັກສີ, ເສລີພາບ ແລະ ຊັບສິນຂອງຜູ້ກ່ຽວ ຕາມກົດໝາຍ, ສົນທິສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;

3. ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ຄົນຕ່າງປະເທດທີ່ຖືກເຄາະຮ້າຍ ຢູ່ ສປປ ລາວ ໃນການກັບຄືນປະເທດທີ່ຜູ້ກ່ຽວຖືສັນຊາດ ຫຼື ບ່ອນຢູ່ສຸດທ້າຍ ໂດຍຖືກຕ້ອງຕາມສົນທິສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 53 ການຊ່ວຍເຫຼືອ ຊຶ່ງກັນ ແລະ ກັນທາງດ້ານກົດໝາຍ**

ການຊ່ວຍເຫຼືອຊຶ່ງກັນ ແລະ ກັນທາງດ້ານກົດໝາຍ ລະຫວ່າງ ສປປ ລາວ ກັບ ປະເທດທີ່ກ່ຽວຂ້ອງ ໄດ້ຮັບການປະຕິບັດບົນພື້ນຖານສົນທິສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ແລະ ປະເທດດັ່ງກ່າວເປັນພາຄີ ໂດຍສອດຄ່ອງກັບກົດໝາຍ ຂອງ ສປປ ລາວ, ກົດໝາຍ ແລະ ລະບຽບການອື່ນຂອງສາກົນ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃຫ້ບູລິມະສິດໃນການຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ ທາງດ້ານກົດໝາຍແກ່ປະເທດໃດໜຶ່ງ ຕາມສົນທິສັນຍາສາກົນ ແລະ ສົນທິສັນຍາ ກັບ ສປປ ລາວ ໃນການເຄື່ອນໄຫວຕ້ານການຄ້າມະນຸດ.

ສຳລັບຈຸດປະສານງານ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນສົນທິສັນຍາສາກົນ ແລະ ສົນທິສັນຍາທີ່ກ່ຽວຂ້ອງ.

# ພາກທີ IV
# ການຈັດຕັ້ງທີ່ຮັບຜິດຊອບຕ້ານການຄ້າມະນຸດ
## ໝວດທີ 1
## ຄະນະກຳມະການຕ້ານການຄ້າມະນຸດ

**ມາດຕາ 54 ຄະນະກຳມະການຕ້ານການຄ້າມະນຸດ**

ຄະນະກຳມະການຕ້ານການຄ້າມະນຸດ ປະກອບດ້ວຍ:

1. ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ;
2. ຄະນະກຳມະການຕ້ານການຄ້າມະນຸດ ແຂວງ, ນະຄອນຫຼວງ.

ໃນກໍລະນີມີຄວາມຈຳເປັນ ອາດຈະສ້າງຕັ້ງຄະນະກຳມະການຕ້ານການຄ້າມະນຸດເມືອງ, ເທດສະບານ, ນະຄອນ ແລະ ບ້ານ ຂຶ້ນກໍໄດ້.

**ມາດຕາ 55 ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ**

ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ແມ່ນ ການຈັດຕັ້ງຂອງລັດທີ່ບໍ່ປະຈຳການ ຊຶ່ງຖືກແຕ່ງຕັ້ງໂດຍນາຍົກລັດຖະມົນຕີ, ມີພາລະບົດບາດເປັນເສນາທິການໃຫ້ລັດຖະບານ ໃນການຊີ້ນຳ, ຕິດຕາມ, ກວດກາ, ຊຸກຍູ້ ບັນດາກະຊວງ, ອົງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້ານະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບການຄ້າມະນຸດ ແລະ ເຮັດໜ້າທີ່ໂຄສະນາ, ຂົນຂວາຍ, ຍາດແຍ່ງທຶນຮອນ ແລະ ເຕັກນິກວິຊາການ, ເປັນໃຈກາງໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ໃນການປະຕິບັດວຽກງານຕ້ານການຄ້າມະນຸດ ຂອງ ສປປ ລາວ.

ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ມີ ຊື່ຫຍໍ້ວ່າ **ຄຕມຊ.**

**ມາດຕາ 56 ໂຄງປະກອບຂອງຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ**

ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ປະກອບດ້ວຍ:

1. ຮອງນາຍົກລັດຖະມົນຕີ ເປັນປະທານ;
2. ລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ເປັນຮອງປະທານ ທັງເປັນຜູ້ປະຈຳການ;
3. ຮອງລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຮອງປະທານ;
4. ຮອງປະທານສູນກາງສະຫະພັນແມ່ຍິງລາວ ເປັນຮອງປະທານ;
5. ຮອງລັດຖະມົນຕີ ກະຊວງການຕ່າງປະເທດ ເປັນຮອງປະທານ;
6. ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການລັດຖະບານ ເປັນກຳມະການ;
7. ຮອງລັດຖະມົນຕີ ກະຊວງຍຸຕິທຳ ເປັນກຳມະການ;

8. ຮອງລັດຖະມົນຕີ ກະຊວງສາທາລະນະສຸກ ເປັນກຳມະການ;

9. ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ເປັນກຳມະການ;

10. ຮອງລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນກຳມະການ;

11. ຮອງເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເປັນກຳມະການ;

12. ຮອງປະທານສູນກາງສະຫະພັນກຳມະບານລາວ ເປັນກຳມະການ;

13. ຮອງຫົວໜ້າກົມໃຫຍ່ຕຳຫຼວດ ກະຊວງປ້ອງກັນຄວາມສະຫງົບ ຜູ້ຊີ້ນຳວຽກງານຕ້ານການຄ້າມະນຸດ ເປັນກຳມະການ ທັງເປັນຫົວໜ້າກອງເລຂາ.

**ມາດຕາ 57 ສິດ ແລະ ໜ້າທີ່ຂອງ ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ**

ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ນະໂຍບາຍ, ແຜນຍຸດທະສາດ, ແຜນງານ, ແຜນການ ແລະ ໂຄງການ ກ່ຽວກັບວຽກງານຕ້ານການຄ້າມະນຸດ ເພື່ອສະເໜີລັດຖະບານພິຈາລະນາ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ ແລະ ລະບຽບການ, ສະໜອງ ຂໍ້ມູນຂ່າວສານ ກ່ຽວກັບວຽກງານຕ້ານການຄ້າມະນຸດ ໃຫ້ແກ່ປະຊາຊົນ ແລະ ພາກສ່ວນຕ່າງໆ ຢູ່ພາຍໃນ ແລະຕ່າງປະເທດ;

3. ຊີ້ນຳ, ຕິດຕາມ, ກວດກາ ຄະນະກຳມະການຕ້ານການຄ້າມະນຸດຂັ້ນແຂວງ;

4. ຊີ້ນຳ, ຊຸກຍູ້, ຕິດຕາມ ແລະ ປະສານສົມທົບກັບ ກະຊວງ, ອົງການ,ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ກ່ຽວກັບວຽກງານຕ້ານການຄ້າມະນຸດ;

5. ຈັດກອງປະຊຸມສະຫຼຸບ ແລະ ຖອດຖອນບົດຮຽນ ກ່ຽວກັບວຽກງານຕ້ານການຄ້າມະນຸດ;

6. ພົວພັນ, ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຕ້ານການຄ້າມະນຸດ;

7. ສະຫຼຸບ ລາຍງານ ການເຄື່ອນໄຫວວຽກງານຕ້ານການຄ້າມະນຸດ ໃຫ້ລັດຖະບານຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 58 ກອງເລຂາຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ**

ກອງເລຂາຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ມີ ຫ້ອງການຂຶ້ນກັບກົມໃຫຍ່ຕຳຫຼວດ ກະຊວງປ້ອງກັນຄວາມສະຫງົບ, ມີພາລະບົດບາດເປັນເສນາທິການໃຫ້ແກ່ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ, ເປັນໃຈກາງປະສານງານກັບພາກສ່ວນທີ່ກ່ຽວຂ້ອງທັງພາຍໃນ ແລະ

ຕ່າງປະເທດ ກ່ຽວກັບວຽກງານຕ້ານການຄ້າມະນຸດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 57 ຂອງກົດໝາຍສະບັບນີ້.

ກອງເລຂາຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ຖືກແຕ່ງຕັ້ງໂດຍປະທານຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ.

### ມາດຕາ 59 ຄະນະກຳມະການຕ້ານການຄ້າມະນຸດ ແຂວງ, ນະຄອນຫຼວງ

ຄະນະກຳມະການຕ້ານການຄ້າມະນຸດ ແຂວງ, ນະຄອນຫຼວງ ແມ່ນ ການຈັດຕັ້ງຂອງລັດທີ່ບໍ່ປະຈຳການ ຊຶ່ງຖືກແຕ່ງຕັ້ງໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ມີພາລະບົດບາດຈັດຕັ້ງຜັນຂະຫຍາຍ ແຜນຍຸດທະສາດ, ແຜນງານ, ໂຄງການ ແລະ ກິດຈະກຳ ກ່ຽວກັບວຽກງານຕ້ານການຄ້າມະນຸດ, ເປັນໃຈກາງໃນການພົວພັນ ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

ຄະນະກຳມະການຕ້ານການຄ້າມະນຸດ ແຂວງ, ນະຄອນຫຼວງ ມີ ກອງເລຂາ ຊຶ່ງມີຫ້ອງການຂຶ້ນກັບຫ້ອງຕຳຫຼວດ ກອງບັນຊາການ ປກສ ແຂວງ, ນະຄອນຫຼວງ.

ສຳລັບ ໂຄງປະກອບ, ສິດ ແລະ ໜ້າທີ່ ຂອງຄະນະກຳມະການຕ້ານການຄ້າມະນຸດ ແຂວງ, ນະຄອນຫຼວງ ລວມທັງກອງເລຂາ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 60 ເຈົ້າໜ້າທີ່ສະກັດກັ້ນ ແລະ ຕ້ານການຄ້າມະນຸດ

ເຈົ້າໜ້າທີ່ສະກັດກັ້ນ ແລະ ຕ້ານການຄ້າມະນຸດ ແມ່ນ ເຈົ້າໜ້າທີ່ຕຳຫຼວດ ຊຶ່ງຖືກແຕ່ງຕັ້ງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຊຶ່ງມີສິດ ແລະ ໜ້າທີ່ຈັດຕັ້ງປະຕິບັດແຜນຍຸດທະສາດ, ຊອກຮູ້, ກຳແໜ້ນ ສະພາບການຮອບດ້ານ, ບັນດາເລ່ຫຼ່ຽມການເຄື່ອນໄຫວກ່ຽວກັບການຄ້າມະນຸດ ເພື່ອວາງມາດຕະການ ປ້ອງກັນ, ສະກັດກັ້ນ ແລະ ກອບກູ້ ຜູ້ຖືກເຄາະຮ້າຍຢ່າງທັນການ ແລະ ດຳເນີນຄະດີຕາມກົດໝາຍ.

## ໝວດທີ 2
## ບັນດາຂະແໜງການທີ່ຮັບຜິດຊອບວຽກງານຕ້ານການຄ້າມະນຸດ

### ມາດຕາ 61 ບັນດາຂະແໜງການທີ່ຮັບຜິດຊອບວຽກງານຕ້ານການຄ້າມະນຸດ

ບັນດາຂະແໜງການທີ່ຮັບຜິດຊອບວຽກງານຕ້ານການຄ້າມະນຸດ ມີ ດັ່ງນີ້:

1. ຂະແໜງການປ້ອງກັນຄວາມສະຫງົບ;
2. ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ;

3. ສະຫະພັນແມ່ຍິງລາວ;
4. ຂະແໜງການສາທາລະນະສຸກ;
5. ຂະແໜງການການຕ່າງປະເທດ;
6. ຂະແໜງການຍຸຕິທຳ;
7. ຂະແໜງການສຶກສາທິການ ແລະ ກິລາ;
8. ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
9. ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ;
10. ສະຫະພັນກຳມະບານລາວ.

ບັນດາຂະແໜງການທີ່ກ່າວມາເທິງນີ້ ນອກຈາກຈະຮັບຜິດຊອບວຽກງານຕ້ານການຄ້າມະນຸດ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນພາກທີ III ນັ້ນແລ້ວ ຍັງມີຄວາມຮັບຜິດຊອບຕາມມາດຕາ 62 ຫາ 71 ຂອງກົດໝາຍສະບັບນີ້ອີກ.

**ມາດຕາ 62 ຂະແໜງການປ້ອງກັນຄວາມສະຫງົບ**

ຂະແໜງການປ້ອງກັນຄວາມສະຫງົບ ຮັບຜິດຊອບ ຊີ້ນຳ, ນຳພາ, ບັນຊາ, ຄຸ້ມຄອງ, ຕິດຕາມ, ກວດກາການຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 63 ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ**

ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ ຮັບຜິດຊອບຝຶກອົບຮົມວິຊາຊີບໄລຍະຍາວ, ພັດທະນາສີມືແຮງງານ, ຊອກວຽກເຮັດງານທຳ ໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ພ້ອມທັງເຮັດໜ້າທີ່ສົງເຄາະຜູ້ຖືກເຄາະຮ້າຍ ເຊັ່ນ ສະໜອງບ່ອນພັກເຊົາທີ່ປອດໄພ, ບຳບັດຟື້ນຟູ, ດູແລຜູ້ຖືກເຄາະຮ້າຍ, ໃຫ້ຄຳປຶກສາດ້ານຕ່າງໆ, ສົ່ງກັບຄືນສູ່ຄອບຄົວ ແລະ ສັງຄົມ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 64 ສະຫະພັນແມ່ຍິງລາວ**

ສະຫະພັນແມ່ຍິງລາວ ຮັບຜິດຊອບຈັດຫາບ່ອນພັກເຊົາຊົ່ວຄາວທີ່ປອດໄພ, ບຳບັດຟື້ນຟູ, ດູແລຜູ້ຖືກເຄາະຮ້າຍຂັ້ນພື້ນຖານ, ຝຶກອົບຮົມວິຊາຊີບໄລຍະສັ້ນ, ໃຫ້ຄຳປຶກສາ, ຄຳແນະນຳທາງດ້ານກົດໝາຍ,ເປັນຜູ້ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ກຽມຄວາມພ້ອມໃຫ້ຜູ້ຖືກເຄາະຮ້າຍ ຕາມຂັ້ນຕອນຂອງການດຳເນີນຄະດີ ທັງເປັນຜູ້ຕາງໜ້າໃນການດຳເນີນຄະດີ, ການສົ່ງກັບຄືນສູ່ຄອບຄົວ ແລະ ສັງຄົມ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 65 ຂະແໜງການສາທາລະນະສຸກ**

ຂະແໜງການສາທາລະນະສຸກ ຮັບຜິດຊອບກວດ, ຢັ້ງຢືນ, ປິ່ນປົວ ສຸຂະພາບ ແລະ ຢັ້ງຢືນອາຍຸ, ໃຫ້ຄຳປຶກສາ, ຄຳແນະນຳດ້ານສຸຂະພາບຈິດ ແລະ ຈິດບຳບັດ ໃຫ້ແກ່ຜູ້ຖືກເຄາະຮ້າຍໂດຍບໍ່ເສຍຄ່າ.

**ມາດຕາ 66 ຂະແໜງການການຕ່າງປະເທດ**

ຂະແໜງການການຕ່າງປະເທດ ຮັບຜິດຊອບຊີ້ນຳວຽກງານກ່ຽວກັບການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ໃນການພິສູດສັນຊາດ, ອຳນວຍຄວາມສະດວກໃນການອອກເອກະສານເດີນທາງລະຫວ່າງປະເທດ, ໃຫ້ການຊ່ວຍເຫຼືອອັນຈຳເປັນ, ເຂົ້າຮ່ວມການສຳພາດ ແລະ ເກັບກຳຂໍ້ມູນເບື້ອງຕົ້ນ ຂອງຜູ້ຖືເຄາະຮ້າຍທີ່ເປັນພົນລະເມືອງລາວ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດ ຢູ່ ສປປ ລາວ ຊຶ່ງຖືກເຄາະຮ້າຍຢູ່ຕ່າງປະເທດ; ປະສານງານກັບຕ່າງປະເທດ ເພື່ອແລກປ່ຽນຂໍ້ມູນໃຫ້ແກ່ການດຳເນີນຄະດີ; ການມອບຮັບ ແລະ ການນຳສົ່ງຜູ້ຖືກເຄາະຮ້າຍກັບຄືນປະເທດ ພ້ອມທັງຄຸ້ມຄອງບັນດາອົງການຈັດຕັ້ງສາກົນ, ອົງການຈັດຕັ້ງບໍ່ສັງກັດລັດຖະບານທີ່ເຄື່ອນໄຫວວຽກງານຕ້ານການຄ້າມະນຸດ.

**ມາດຕາ 67 ຂະແໜງການຍຸຕິທຳ**

ຂະແໜງການຍຸຕິທຳ ຮັບຜິດຊອບປະສານງານກັບກະຊວງປ້ອງກັນຄວາມສະຫງົບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການຄົ້ນຄວ້າ, ສ້າງ, ປັບປຸງ, ຈັດຕັ້ງ ແລະ ຊີ້ນຳ ການໂຄສະນາ, ເຜີຍແຜ່ກົດໝາຍ ແລະ ນິຕິກຳອື່ນກ່ຽວກັບວຽກງານຕ້ານການຄ້າມະນຸດ; ຊີ້ນຳ, ຄົ້ນຄວ້າ, ພິຈາລະນາ ແລະ ຈົດທະບຽນການຂໍເອົາເດັກນ້ອຍລາວໄປເປັນລູກລ້ຽງ ຂອງຄົນຕ່າງປະເທດ; ໃຫ້ຄຳປຶກສາ ແລະ ຊ່ວຍເຫຼືອດ້ານກົດໝາຍ; ຊີ້ນຳ ແລະ ຈັດຕັ້ງປະຕິບັດຄຳຕັດສິນຂອງສານໃຫ້ມີຄວາມຖືກຕ້ອງ, ຄົບຖ້ວນ, ວ່ອງໄວ ແລະ ຍຸຕິທຳ.

**ມາດຕາ 68 ຂະແໜງການສຶກສາທິການ ແລະ ກິລາ**

ຂະແໜງການສຶກສາທິການ ແລະ ກິລາ ຮັບຜິດຊອບສ້າງເງື່ອນໄຂໃຫ້ພົນລະເມືອງລາວໄດ້ຮັບການສຶກສາຂັ້ນພື້ນຖານຢ່າງທົ່ວເຖິງ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ຢູ່ເຂດຊົນນະບົດຫ່າງໄກສອກຫຼີກ; ຊີ້ນຳ, ຄຸ້ມຄອງ, ແນະນຳ, ຕິດຕາມ, ກວດກາ ສະຖານການສຶກສາ ເປັນຕົ້ນ ໂຮງຮຽນເພື່ອປ້ອງກັນນັກຮຽນ, ນັກສຶກສາ ຢູ່ພາຍໃນ ແລະ ຕ່າງປະເທດ ບໍ່ໃຫ້ຕົກເປັນເຫຍື່ອ ຫຼື ຜູ້ຖືກເຄາະຮ້າຍ ຂອງການຄ້າມະນຸດ; ສົບຊ້ອນເອົາວຽກງານຕ້ານການຄ້າມະນຸດເຂົ້າໃນການສິດສອນ; ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ຜູ້ຖືກເຄາະຮ້າຍ ໄດ້ສືບຕໍ່ເຂົ້າຮຽນໃນລະບົບການສຶກສາຂັ້ນຕ່າງໆ ໂດຍບໍ່ເສຍຄ່າ.

**ມາດຕາ 69 ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຮັບຜິດຊອບໂຄສະນາ, ເຜີຍແຜ່ວຽກງານຕ້ານການຄ້າມະນຸດ; ຄຸ້ມຄອງ, ຕິດຕາມ, ກວດກາ ສື່ມວນຊົນ, ສື່ເອເລັກໂຕຣນິກ, ສື່ສິ່ງພິມ, ທຸລະກິດທ່ອງທ່ຽວ, ທຸລະກິດພັກແຮມ ແລະ ສະຖານທີ່ບໍລິການ ເພື່ອບໍ່ໃຫ້ເກີດມີການຄ້າມະນຸດ ແລະ ສິ່ງຫຍໍ້ທໍ້ອື່ນ.

**ມາດຕາ 70 ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ**

ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ຮັບຜິດຊອບໂຄສະນາ, ສຶກສາອົບຮົມ, ປູກຈິດສຳນຶກກ່ຽວກັບຜົນກະທົບຂອງການຄ້າມະນຸດ ໃຫ້ຊາວໜຸ່ມລາວບັນດາເຜົ່າ ດ້ວຍຫຼາຍຮູບການ ແລະ ວິທີການ ເພື່ອປ້ອງກັນຕົນເອງບໍ່ໃຫ້ຕົກເປັນເຫຍື່ອ ຫຼື ຜູ້ຖືກເຄາະຮ້າຍ ຂອງການຄ້າມະນຸດ; ຊຸກຍູ້ສົ່ງເສີມໃຫ້ຊາວໜຸ່ມໄດ້ສຶກສາຮ່ຳຮຽນ, ມີວິຊາຊີບ, ມີວຽກເຮັດງານທຳ ແລະ ມີລາຍຮັບ.

**ມາດຕາ 71 ສະຫະພັນກຳມະບານລາວ**

ສະຫະພັນກຳມະບານລາວ ຮັບຜິດຊອບໃນການປົກປ້ອງສິດຜົນປະໂຫຍດອັນຊອບທຳ ຂອງກຳມະກອນ, ຊາວຜູ້ອອກແຮງງານ ຢູ່ທົ່ວໜ່ວຍແຮງງານຕ່າງໆ; ໂຄສະນາ, ສຶກສາອົບຮົມ ກຳມະກອນ, ຊາວຜູ້ອອກແຮງງານ ເພື່ອບໍ່ໃຫ້ຕົກເປັນເຫຍື່ອ ຫຼື ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ.

## ພາກທີ V
## ຂໍ້ຫ້າມ

**ມາດຕາ 72 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງຂອງລັດ**

ຫ້າມ ເຈົ້າໜ້າທີ່ ແລະ ພະນັກງານ ທີ່ກ່ຽວຂ້ອງຂອງລັດ ມີ ພຶດຕິກຳ ດັ່ງນີ້:

1. ຮັບ, ທວງເອົາສິນບົນ, ສວຍໃຊ້ຕຳແໜ່ງ, ໜ້າທີ່ ເພື່ອຫາຜົນປະໂຫຍດສ່ວນຕົວ;
2. ເປີດເຜີຍຂໍ້ມູນກ່ຽວກັບຜູ້ຖືກເຄາະຮ້າຍ ໂດຍບໍ່ໄດ້ຮັບອະນຸຍາດ;
3. ເມີນເສີຍ, ປ່ອຍປະລະເລີຍ, ລຳອຽງ, ບໍ່ທ່ຽງທຳ, ຈຳແນກ ໃນການປະຕິບັດໜ້າທີ່;
4. ຍຸຍົງ, ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ການຄ້າມະນຸດ;
5. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 73 ຂໍ້ຫ້າມສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ມີ ພຶດຕິກຳ ດັ່ງນີ້:

1. ຊອກຫາ, ຂົນຂວາຍ, ຂົນສົ່ງ ຫຼື ນຳສົ່ງ, ນາບຂູ່, ຂົ່ມເຫັງ, ບັງຄັບ, ໃຊ້ກຳລັງ, ສວຍໃຊ້ອຳນາດ, ຊື້ຈ້າງ, ຈອບອອຍ, ຕົວະຍົວະຫຼອກລວງ, ຍຸຍົງ, ແນະນຳ, ຊ່ວຍເຫຼືອ ຫຼື ອຳນວຍຄວາມສະດວກ ແກ່ບຸກຄົນອື່ນໃຫ້ຄ້າມະນຸດ;
2. ຮັບ ແລະ ໃຫ້ ສິນບົນ;
3. ແກ້ແຄ້ນ, ນາບຂູ່ຜູ້ໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ;
4. ກີດກັ້ນ, ຂັດຂວາງ ຜູ້ພົບເຫັນ ຫຼື ພະຍານ ໃນການໃຫ້ການ ຫຼື ການໃຫ້ຄວາມຮ່ວມມືໃນການຕ້ານການຄ້າມະນຸດ;
5. ໂຄສະນາ, ຊັກຊວນ ດ້ວຍທຸກຮູບແບບ ເພື່ອຈຸດປະສົງຄ້າມະນຸດ;
6. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

# ພາກທີ VI
# ການຄຸ້ມຄອງ ແລະ ກວດກາ
## ໝວດທີ 1
## ການຄຸ້ມຄອງວຽກງານຕ້ານການຄ້າມະນຸດ

**ມາດຕາ 74 ອົງການຄຸ້ມຄອງ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານຕ້ານການຄ້າມະນຸດຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບ ກັບກະຊວງ, ອົງການ,ພາກສ່ວນອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງປະກອບດ້ວຍ:

1. ກະຊວງປ້ອງກັນຄວາມສະຫງົບ;
2. ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ;
3. ກອງບັນຊາການປ້ອງກັນຄວາມສະຫງົບເມືອງ, ເທດສະບານ, ນະຄອນ.

**ມາດຕາ 75 ສິດ ແລະ ໜ້າທີ່ຂອງກະຊວງປ້ອງກັນຄວາມສະຫງົບ**

ໃນການຄຸ້ມຄອງວຽກງານຕ້ານການຄ້າມະນຸດ ກະຊວງປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງ ແລະ ປັບປຸງນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານຕ້ານການຄ້າມະນຸດ ເພື່ອສະເໜີລັດຖະບານພິຈາລະນາ;

2. ຊີ້ນຳການ ສ້າງ ແລະ ຈັດຕັ້ງປະຕິບັດແຜນການ, ໂຄງການ, ກິດຈະກຳ ຕ້ານການຄ້າມະນຸດ;

3. ໂຄສະນາ, ເຜີຍແຜ່ ແນວທາງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຕ້ານການຄ້າມະນຸດ ລວມທັງສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;

4. ສ້າງ, ປັບປຸງກົນໄກການຈັດຕັ້ງທີ່ຮັບຜິດຊອບຕ້ານການຄ້າມະນຸດ ຂອງຂະແໜງການຕົນຢູ່ ສູນກາງ ແລະ ທ້ອງຖິ່ນ;

5. ຊີ້ນຳການດຳເນີນຄະດີ ຂອງເຈົ້າໜ້າທີ່ຕຳຫຼວດ ກ່ຽວກັບການຄ້າມະນຸດ;

6. ປະສານສົມທົບ, ຊຸກຍູ້ ແລະ ຕິດຕາມບັນດາກະຊວງ, ອົງການ, ພາກສ່ວນອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງກັບວຽກງານຕ້ານການຄ້າມະນຸດ;

7. ພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານຕ້ານການຄ້າມະນຸດ;

8. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 76 ສິດ ແລະ ໜ້າທີ່ຂອງກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານຕ້ານການຄ້າມະນຸດ ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຕ້ານການຄ້າມະນຸດ;

2. ໂຄສະນາ, ເຜີຍແຜ່ ແນວທາງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຕ້ານການຄ້າມະນຸດ ລວມທັງສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;

3. ຊີ້ນຳການ ສ້າງ ແລະ ຈັດຕັ້ງປະຕິບັດແຜນການ, ໂຄງການ ແລະ ກິດຈະກຳ ຕ້ານການຄ້າມະນຸດ;

4. ສ້າງ, ປັບປຸງກົນໄກການຈັດຕັ້ງ ທີ່ຮັບຜິດຊອບຕ້ານການຄ້າມະນຸດ;

5. ດຳເນີນຄະດີກ່ຽວກັບການຄ້າມະນຸດ;

6. ປະສານສົມທົບ, ຊຸກຍູ້ ແລະ ຕິດຕາມບັນດາພະແນກ, ອົງການ ແລະ ພາກສ່ວນອື່ນ ກ່ຽວກັບວຽກງານຕ້ານການຄ້າມະນຸດ;

7. ພົວພັນ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານຕ້ານການຄ້າມະນຸດ ຕາມການມອບໝາຍ;

8. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 77 ສິດ ແລະ ໜ້າທີ່ຂອງກອງບັນຊາການປ້ອງກັນຄວາມສະຫງົບເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານຕ້ານການຄ້າມະນຸດ ກອງບັນຊາການປ້ອງກັນຄວາມສະຫງົບເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຕ້ານການຄ້າມະນຸດ;

2. ເຜີຍແຜ່ແນວທາງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຕ້ານການຄ້າມະນຸດ ລວມທັງສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;

3. ຈັດຕັ້ງປະຕິບັດແຜນການ, ໂຄງການ ແລະ ກິດຈະກຳ ຕ້ານການຄ້າມະນຸດ;

4. ສະເໜີ ສ້າງ, ປັບປຸງກົນໄກການຈັດຕັ້ງ ທີ່ຮັບຜິດຊອບຕ້ານການຄ້າມະນຸດ;

5. ດຳເນີນການສືບສວນ-ສອບສວນ ເບື້ອງຕົ້ນກ່ຽວກັບຄະດີການຄ້າມະນຸດ;

6. ປະສານສົມທົບ ກັບບັນດາຫ້ອງການ, ອົງການ ແລະ ພາກສ່ວນອື່ນ ກ່ຽວກັບວຽກງານຕ້ານການຄ້າມະນຸດ;

7. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 78 ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ, ພາກສ່ວນອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ**

ໃນການຄຸ້ມຄອງວຽກງານຕ້ານການຄ້າມະນຸດ ກະຊວງ, ອົງການ, ພາກສ່ວນອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຮັບຜິດຊອບ ຄຸ້ມຄອງ, ຕິດຕາມ, ກວດກາ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໂດຍປະສານສົມທົບກັບຄະນະກຳມະການຕ້ານການຄ້າມະນຸດ ແລະ ຂະແໜງການປ້ອງກັນຄວາມສະຫງົບ ໃນການຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດ.

## ໝວດທີ 2
## ການກວດກາວຽກງານຕ້ານການຄ້າມະນຸດ

**ມາດຕາ 79 ອົງການກວດກາ**

ອົງການກວດກາ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານຕ້ານການຄ້າມະນຸດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 74 ຂອງກົດໝາຍສະບັບນີ້.

2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ສະພາປະຊາຊົນຂັ້ນແຂວງ.

**ມາດຕາ 80 ເນື້ອໃນການກວດກາ**

ການກວດກາວຽກງານຕ້ານການຄ້າມະນຸດ ມີ ເນື້ອໃນ ດັ່ງນີ້:

1. ການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຕ້ານການຄ້າມະນຸດ;
2. ການນຳໃຊ້ສິດ ແລະ ການປະຕິບັດໜ້າທີ່ ລວມທັງການນຳໃຊ້ມາດຕະການທາງດ້ານກົດໝາຍຕໍ່ຜູ້ກະທຳຜິດ;
3. ການປ້ອງກັນ, ການປົກປ້ອງ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ;
4. ການກັບຄືນສູ່ຄອບຄົວ ແລະ ສັງຄົມ.

**ມາດຕາ 81 ຮູບການການກວດກາ**

ການກວດກາ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາຕາມແຜນການ ແລະ ມີກຳນົດເວລາອັນແນ່ນອນ ຊຶ່ງຕ້ອງປະຕິບັດຢ່າງໜ້ອຍໜຶ່ງຄັ້ງຕໍ່ປີ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າຢ່າງໜ້ອຍ ຊາວສີ່ຊົ່ວໂມງ.

ການກວດກາແບບກະທັນຫັນ ແມ່ນ ການກວດກາໃນເວລາທີ່ເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ.

ການກວດກາ ຕ້ອງປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ VII
## ງົບປະມານ

**ມາດຕາ 82 ງົບປະມານຮັບໃຊ້ວຽກງານຕ້ານການຄ້າມະນຸດ**

ໃນການເຄື່ອນໄຫວວຽກງານຕ້ານການຄ້າມະນຸດ ໃຫ້ນຳໃຊ້ງົບປະມານຂອງລັດ. ນອກຈາກນີ້ ຍັງໄດ້ມາຈາກການຊ່ວຍເຫຼືອ, ການປະກອບສ່ວນຈາກ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ.

ບັນດາຂະແໜງການທີ່ຮັບຜິດຊອບວຽກງານຕ້ານການຄ້າມະນຸດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 61 ຂອງກົດໝາຍສະບັບນີ້ ຕ້ອງຂຶ້ນແຜນງົບປະມານ ກ່ຽວກັບວຽກງານຕ້ານການຄ້າມະນຸດ ສົ່ງໃຫ້ກອງເລຂາຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ເພື່ອສັງລວມ ແລ້ວນຳສະເໜີຂັ້ນເທິງພິຈາລະນາ.

**ມາດຕາ 83 ການຄຸ້ມຄອງ ແລະ ນຳໃຊ້ງົບປະມານ**

ກອງເລຂາຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ເປັນຫົວໜ່ວຍງົບປະມານຂັ້ນສອງ ຂຶ້ນກັບກະຊວງປ້ອງກັນຄວາມສະຫງົບ ຊຶ່ງເປັນຜູ້ຄຸ້ມຄອງ ແລະ ນຳໃຊ້ງົບປະມານດັ່ງກ່າວ ຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 84 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ຄອບຄົວ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບ ການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ. ສຳລັບເຈົ້າໜ້າທີ່ກ່ຽວຂ້ອງນັ້ນ ຍັງຈະໄດ້ຮັບການ ເລື່ອນຊັ້ນ, ເລື່ອນຂັ້ນ ແລະ ເລື່ອນຕຳແໜ່ງອີກດ້ວຍ.

**ມາດຕາ 85 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ຄອບຄົວ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 72 ແລະ 73 ຈະຖືກ ສຶກສາອົບຮົມ, ລົງວິໄນ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ແລ້ວແຕ່ກໍລະນີ ເບົາ ຫຼື ໜັກ.

**ມາດຕາ 86 ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ຄອບຄົວ ທີ່ບໍ່ໃຫ້ຄວາມຮ່ວມມືໃນວຽກງານຕ້ານການຄ້າມະນຸດ ເປັນຕົ້ນ ການປ້ອງກັນ, ການສະກັດກັ້ນ, ການປົກປ້ອງ, ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ໃນການດຳເນີນຄະດີ ຈະຖືກສຶກສາອົບຮົມ, ກ່າວເຕືອນ.

**ມາດຕາ 87 ມາດຕະການທາງວິໄນ**

ພະນັກງານ ຫຼື ເຈົ້າໜ້າທີ່ຂອງລັດ ທີ່ລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນມາດຕາ 72 ຂອງກົດໝາຍສະບັບນີ້ ຊຶ່ງມີລັກສະນະເບົາ ບໍ່ເປັນການກະທຳຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍບໍ່ຫຼວງຫຼາຍ ແຕ່ບໍ່ມີຄວາມຈິງໃຈລາຍງານ, ຫຼົບຫຼີກຈາກການກະທຳຜິດຂອງຕົນ ຈະຖືກລົງວິໄນຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 88 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ຄອບຄົວ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງໄດ້ກໍ່ຄວາມເສຍຫາຍ ໃຫ້ແກ່ຜູ້ອື່ນ ຈະໄດ້ຮັບຜິດຊອບໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 89 ມາດຕະການທາງອາຍາ**

ບຸກຄົນຜູ້ໃດຫາກໄດ້ກະທຳຜິດໃນສະຖານຄ້າມະນຸດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ຫ້າປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝແຕ່ 10.000.000 ກີບ ຫາ 100.000.000 ກີບ ແລະ ຈະຖືກຮິບຊັບຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ.

ໃນກໍລະນີທີ່ການກະທຳຜິດຫາກເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ, ຜູ້ຖືກເຄາະຮ້າຍເປັນເດັກ, ຜູ້ຖືກເຄາະຮ້າຍມີຈຳນວນແຕ່ ສອງຄົນຂຶ້ນໄປ, ເປັນຍາດໃກ້ຊິດຂອງຜູ້ກະທຳຜິດ, ຜູ້ຖືກເຄາະຮ້າຍໄດ້ຮັບບາດເຈັບສາຫັດ, ເສຍອົງຄະ, ພິການ ຫຼື ເສຍຈິດ ຈະຖືກລົງໂທດຕັດອິດສະລະພາບແຕ່ ສິບຫ້າປີ ຫາ ຊາວປີ ແລະ ຈະຖືກປັບໃໝແຕ່ 100.000.000 ກີບ ຫາ 500.000.000 ກີບ ແລະ ຈະຖືກຮິບຊັບຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ.

ໃນກໍລະນີທີ່ການກະທຳຜິດຫາກໄດ້ເຮັດໃຫ້ຜູ້ຖືກເຄາະຮ້າຍ ພິການຕະຫຼອດຊີວິດ, ຕິດເຊື້ອເຮສໄອວີ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝແຕ່ 500.000.000 ກີບຫາ 1.000.000.000 ກີບ ແລະ ຈະຖືກຮິບຊັບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ ຫຼື ປະຫານຊີວິດ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

# ພາກທີ IX
# ບົດບັນຍັດສຸດທ້າຍ

**ມາດຕາ 90 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 91 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້